# ສາລະຕະຫຼາດທຶນ

## 1. ຄະນະກຳມະການຄຸ້ມຄອງຫຼັກຊັບ ມີບົດບາດແນວໃດ?

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີຊື່ຫຍໍ້ວ່າ: "ຄຄຊ" ຖືກສ້າງຕັ້ງຂຶ້ນໃນເດືອນ ພຶດສະພາ 2009, ຄຄຊ ແມ່ນການຈັດຕັ້ງໜຶ່ງຂອງລັດຖະບານ ມີສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີຊື່ຫຍໍ້ວ່າ: "ສຄຄຊ" ຊຶ່ງຖືກສ້າງຕັ້ງຂຶ້ນໃນເດືອນ ກໍລະກົດ 2009 ເປັນກົງຈັກຊ່ວຍວຽກ.

ຄຄຊ ເປັນອົງການຄຸ້ມຄອງວຽກງານຫຼັກຊັບ ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານວຽກງານຫຼັກຊັບຢ່າງລວມສູນໃນຂອບເຂດທົ່ວປະເທດ ເປັນຕົ້ນແມ່ນ ການຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ແນໃສ່ເຮັດໃຫ້ການລະດົມທຶນ ແລະ ການພັດທະນາຕະຫຼາດຫຼັກຊັບ ມີການເຄື່ອນໄຫວຢ່າງຕໍ່ເນື່ອງ ແລະ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

## 2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີບົດບາດແນວໃດ?

ສຄຄຊ ມີພາລະບົດບາດເປັນກົງຈັກຊ່ວຍວຽກໃຫ້ແກ່ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ.

ສຄຄຊ ມີສິດ ແລະ ໜ້າທີ່ຕົ້ນຕໍ ຄື: ຄົ້ນຄວ້າ, ຮ່າງ ແລະ ປັບປຸງ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບກ່ຽວກັບວຽກງານຫຼັກຊັບ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ, ພ້ອມທັງ ດຳເນີນການແກ້ໄຂຂໍ້ຂັດແຍ່ງ ແລະ ດຳເນີນການສືບສວນ-ສອບສວນຄະດີກ່ຽວກັບວຽກງານຫຼັກຊັບ; ຄົ້ນຄວ້າ ພິຈາລະນາການຮ້ອງຂໍອອກຈຳໜ່າຍຫຼັກຊັບ ພ້ອມທັງຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ; ຕິດຕາມກວດກາການເຄື່ອນໄຫວຂອງຕະຫຼາດຫຼັກຊັບ; ຄົ້ນຄວ້າຄຳຮ້ອງຂໍສ້າງຕັ້ງສະຖາບັນສື່ກາງດ້ານຫຼັກຊັບ ເພື່ອນຳສະເໜີຕໍ່ ຄຄຊ ພິຈາລະນາຮັບຮອງ ພ້ອມທັງຕິດຕາມກວດກາການເຄື່ອນໄຫວຂອງສະຖາບັນດັ່ງກ່າວ ແລະ ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ; ຈັດຕັ້ງຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ມວນຊົນ ຕາມທິດຊີ້ນຳຂອງ ຄຄຊ; ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ ຕາມການມອບໝາຍຂອງ ຄຄຊ.

## 3. ຕະຫຼາດການເງິນແມ່ນຫຍັງ?

ຕະຫຼາດການເງິນ (Financial Market) ປະກອບດ້ວຍ ຕະຫຼາດເງິນ (Money market) ແລະ ຕະຫຼາດທຶນ (Capital market).

**ຕະຫຼາດເງິນ:** ແມ່ນຕະຫຼາດທີ່ດຳເນີນທຸລະກິດທາງດ້ານການເງິນ ດ້ວຍການນຳໃຊ້ເຄື່ອງມືທາງດ້ານການເງິນໄລ ຍະສັ້ນທີ່ມີສະພາບຄ່ອງສູງ ແລະ ມີວັນຄົບກຳນົດສັ້ນໆໃນການລະດົມທຶນ ເຊັ່ນ: ໃບເງິນຝາກປ່ຽນມືໄດ້ (Certificate of Deposits), ໃບເງິນການຄ້າ (Commercial Paper), ໃບສັນຍາຊື້ຄືນ (Repurchase

Agreements), ໃບສັນຍາໃຊ້ໜີ້ (Promissory Note) ແລະ ທຸລະກຳທາງດ້ານການເງິນ ອື່ນໆທີ່ກ່ຽວຂ້ອງ, ຫຼືເວົ້າອີກຢ່າງໜຶ່ງວ່າ ຕະຫຼາດເງິນ ແມ່ນຂະບວນການຈັດສັນແຫຼ່ງທຶນໄລຍະສັ້ນ ແບບທາງອ້ອມ ລະຫວ່າງ ຜູ້ທີ່ຕ້ອງການທຶນ (ຜູ້ກູ້) ກັບຜູ້ສະສົມທຶນ (ຜູ້ຝາກເງິນ) ໂດຍມີທະນາຄານທຸລະກິດເປັນໃຈກາງໃນການລະດົມເງິນຝາກ ແລະ ປ່ອຍສິນເຊື່ອ. ທຶນທີ່ກູ້ຈາກທະນາຄານທຸລະກິດສ່ວນໃຫຍ່ແມ່ນນຳໃຊ້ເປັນທຶນໝູນວຽນເພື່ອເຄື່ອນໄຫວທຸລະກິດ ຫຼື ດັດສົມສະພາບຄ່ອງທາງດ້ານການເງິນໄລຍະສັ້ນ.

**ຕະຫຼາດທຶນ:** ແມ່ນຕະຫຼາດລະດົມທຶນໄລຍະຍາວ ຫຼືເວົ້າອີກຢ່າງໜຶ່ງວ່າ ຕະຫຼາດທຶນ ແມ່ນຂະບວນ ການຈັດສັນທຶນໄລຍະຍາວແບບທາງກົງ ລະຫວ່າງ ພາກສ່ວນທີ່ຕ້ອງການນຳໃຊ້ທຶນ ເຊັ່ນ: ລັດຖະບານ ຫຼື ບັນດາຫົວໜ່ວຍວິສາຫະກິດ ແລະ ພາກສ່ວນທີ່ມີທຶນສະສົມ ເຊັ່ນ: ຜູ້ລົງທຶນປະເພດບຸກຄົນ ຫຼື ປະເພດສະຖາບັນ. ການລະດົມຜ່ານຕະຫຼາດທຶນ ແມ່ນຈັດຕັ້ງປະຕິບັດດ້ວຍການອອກຈຳໜ່າຍຫຼັກຊັບ ເຊັ່ນ: ຮຸ້ນ, ພັນທະບັດ, ຮຸ້ນກູ້ ແລະ ຫຼັກຊັບອື່ນ ເພື່ອຈຸດປະສົງນຳໃຊ້ທຶນທີ່ລະດົມມານັ້ນ ເຂົ້າໃນການລົງທຶນໄລຍະຍາວ ເຊັ່ນ: ການລົງ ທຶນໃສ່ການກໍ່ສ້າງໂຮງງານ, ຂະຫຍາຍຖານການຜະລິດ ແລະ ບໍລິການ ຫຼື ການກໍ່ສ້າງພື້ນຖານໂຄງລ່າງ.

### 4. ຕະຫຼາດຂັ້ນໜຶ່ງ ແລະ ຕະຫຼາດຂັ້ນສອງ

ຕະຫຼາດທຶນທີ່ສົມບູນ ແມ່ນປະກອບດ້ວຍ 2 ຕະຫຼາດ ຄື: ຕະຫຼາດຂັ້ນໜຶ່ງ ແລະ ຕະຫຼາດຂັ້ນສອງ.

– ຕະຫຼາດຂັ້ນໜຶ່ງ ແມ່ນຕະຫຼາດເພື່ອການລະດົມທຶນໄລຍະຍາວຂອງບັນດາບໍລິສັດ ໂດຍການອອກຈຳໜ່າຍຫຼັກຊັບຂອງຕົນໃຫ້ແກ່ຜູ້ລົງທຶນ, ຊຶ່ງການອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຳນັກງານ ຄຄຊ) ຕາມລະບຽບການທີ່ກຳນົດໄວ້.

ການຊື້-ຂາຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແມ່ນການຊື້-ຂາຍລະຫວ່າງບໍລິສັດຜູ້ອອກຈຳໜ່າຍຫຼັກຊັບ (ຜູ້ຕ້ອງການທຶນ) ແລະ ຜູ້ລົງທຶນ (ຜູ້ມີເງິນທຶນ), ຊຶ່ງບໍລິສັດຈະໄດ້ເງິນທຶນໄປດຳເນີນທຸລະກິດຕາມຈຸດປະສົງທີ່ກຳນົດໄວ້ໃນໜັງສືຊວນຊື້. ສຳລັບຜູ້ລົງທຶນກໍ່ຈະໄດ້ຮັບຫຼັກຊັບຂອງບໍລິສັດດັ່ງກ່າວ ຕາມວິທີການແບ່ງປັນຫຼັກຊັບ ທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້, ຊຶ່ງໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

– ຕະຫຼາດຂັ້ນສອງ ແມ່ນສູນກາງໃຫ້ບໍລິການຊື້-ຂາຍຫຼັກຊັບ, ສະສາງ-ຊຳລະ ແລະ ຮັບຝາກຫຼັກຊັບ ຫຼື ເວົ້າອີກຢ່າງໜຶ່ງ ຕະຫຼາດຂັ້ນສອງ ແມ່ນຕະຫຼາດຫຼັກຊັບ ທີ່ເຮັດໜ້າທີ່ເພື່ອອຳນວຍຄວາມສະດວກໃຫ້ແກ່ການຈໍລະຈອນຂອງຫຼັກຊັບທີ່ຜ່ານການອອກຈຳໜ່າຍໃນຕະຫຼາດຂັ້ນໜຶ່ງ. ຕະຫຼາດຂັ້ນສອງຢູ່ ສປປ ລາວ ແມ່ນ ຕະຫຼາດຫຼັກຊັບລາວ (ຕລຊລ).

ການຊື້-ຂາຍຫຼັກຊັບໃນຕະຫຼາດຂັ້ນສອງ ແມ່ນການຊື້-ຂາຍລະຫວ່າງຜູ້ມີຮຸ້ນ ແລະ ຜູ້ມີເງິນທຶນ, ຊຶ່ງເງິນທີ່ເກີດຂຶ້ນຈາກການຊື້-ຂາຍຈະໝູນວຽນລະຫວ່າງຜູ້ຊື້ ແລະ ຜູ້ຂາຍ.

### 5. ຕະຫຼາດຫຼັກຊັບແມ່ນຫຍັງ?

ຕະຫຼາດຫຼັກຊັບ ແມ່ນສູນກາງໃຫ້ບໍລິການຊື້ຂາຍ-ຫຼັກຊັບ, ສະສາງ-ຊຳລະ ແລະ ຮັບຝາກຫຼັກຊັບ ຂອງບໍລິສັດທີ່ນຳເອົາຫຼັກຊັບຂອງຕົນເຂົ້າມາຈົດທະບຽນໃນຕະຫຼາດຫຼັກຊັບ.

ໃນປະຈຸບັນ ຢູ່ ສປປ ລາວ ມີຕະຫຼາດຫຼັກຊັບ 1 ແຫ່ງ ຄື: ຕະຫຼາດຫຼັກຊັບລາວ (ຕລຊລ). ຕລຊລ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 10.10.2010 ໂດຍແມ່ນການຮ່ວມທຶນລະຫວ່າງ ທະນາຄານ ແຫ່ງ ສປປ ລາວ ຖືຮຸ້ນ 51% ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ ຖືຮຸ້ນ 49%.

6. **ສະຖາບັນສື່ກາງດ້ານຫຼັກຊັບ ແມ່ນຫຍັງ?**

ສະຖາບັນສື່ກາງດ້ານຫຼັກຊັບ ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໃຫ້ບໍລິການດ້ານທຸລະກິດຫຼັກຊັບ. ສະຖາບັນສື່ກາງດ້ານຫຼັກຊັບ ປະກອບດ້ວຍ ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດປະເມີນມູນຄ່າຊັບສິນ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແລະ ສະມາຄົມທຸລະກິດຫຼັກຊັບ.

ແຕ່ປະຈຸບັນ ສະຖາບັນສື່ກາງດ້ານຫຼັກຊັບ ໃນ ສປປ ລາວ ປະກອບມີ: ບໍລິສັດຫຼັກຊັບ 4 ແຫ່ງ, ບໍລິສັດກວດສອບ 4 ແຫ່ງ, ທະນາຄານດູແລຊັບສິນ 1 ແຫ່ງ ແລະ ບໍລິສັດປະເມີນມູນຄ່າຊັບສິນ 1 ແຫ່ງ.

7. **ບໍລິສັດຫຼັກຊັບ ແມ່ນຫຍັງ?**

ບໍລິສັດຫຼັກຊັບ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບ ທີ່ເຄື່ອນໄຫວທຸລະກິດຫຼັກຊັບຕາມປະເພດທີ່ໄດ້ຮັບອະນຸຍາດ. ບໍລິສັດຫຼັກຊັບ ເຮັດໜ້າທີ່ໄດ້ 3 ປະເພດ ຄື:

– ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ;
– ເປັນນາຍໜ້າຊື້-ຂາຍຫຼັກຊັບ;
– ເປັນທີ່ປຶກສາດ້ານການເງິນ.

ໃນປະຈຸບັນ ຢູ່ ສປປ ລາວ ມີບໍລິສັດຫຼັກຊັບ 4 ບໍລິສັດ, ຊຶ່ງໃນນັ້ນມີ 3 ບໍລິສັດ ເຮັດໜ້າທີ່ໄດ້ທັງ 3 ປະເພດ ຄື: ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ. ສ່ວນອີກ 1 ບໍລິສັດ ຄື: ບໍລິສັດຫຼັກຊັບ ເອພີເອັມ ລາວ ຈຳກັດ ເຮັດໜ້າທີ່ເປັນພຽງທີ່ປຶກສາດ້ານການເງິນ.

8. **ບໍລິສັດຫຼັກຊັບສາມາດໃຫ້ບໍລິການຫຍັງແດ່?**

ໃນ ສປປ ລາວ ບໍລິສັດຫຼັກຊັບສາມາດໃຫ້ບໍລິການໄດ້ 3 ປະເພດ ດັ່ງລຸ່ມນີ້:

(1) **ທີ່ປຶກສາທາງດ້ານການເງິນ:** ແມ່ນໃຫ້ຄຳປຶກສາກ່ຽວກັບການປັບປຸງໂຄງສ້າງດ້ານການຈັດຕັ້ງ, ການຄຸ້ມຄອງບໍລິຫານ, ດ້ານການເງິນ, ການເຄື່ອນໄຫວທຸລະກິດ ແລະ ອື່ນໆ ເພື່ອກະກຽມການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.

(2) **ນາຍໜ້າຊື້-ຂາຍຫຼັກຊັບ:** ແມ່ນເປັນສື່ກາງ ຫຼື ເປັນຕົວແທນ ເພື່ອດຳເນີນທຸລະກຳຊື້-ຂາຍຫຼັກຊັບຕາມການສັ່ງຊື້ ຫຼື ສັ່ງຂາຍຂອງລູກຄ້າ, ຊື້-ຂາຍຫຼັກຊັບໃນນາມບໍລິສັດຫຼັກຊັບ ໂດຍໃຊ້ເງິນ ແລະ ຫຼັກຊັບ ຂອງບໍລິສັດຫຼັກຊັບ, ໃຫ້ຄຳປຶກສາໂດຍກົງແກ່ຜູ້ລົງທຶນ ກ່ຽວກັບການລົງທຶນໃສ່ຫຼັກຊັບ ຫຼື ກຸ່ມຫຼັກຊັບ, ພ້ອມນີ້ຍັງສາມາດເຮັດໜ້າທີ່ເປັນທີ່ປຶກສາທາງດ້ານການເງິນໄດ້.

(3) **ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ:** ແມ່ນເປັນຜູ້ກຳນົດລາຄາ ແລະ ຈຳນວນຫຼັກຊັບທີ່ຈະອອກຈຳໜ່າຍ, ໃຫ້ການຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ດ້ວຍການຊ່ວຍຈຳໜ່າຍ ຫຼື ຮັບຊື້ຫຼັກຊັບບາງສ່ວນ ຫຼື ທັງໝົດ ຈາກບໍລິສັດອອກຈຳໜ່າຍຫຼັກຊັບ ໃນສ່ວນທີ່ຈຳໜ່າຍບໍ່ໝົດ ເພື່ອຮັບປະກັນຄວາມສຳເລັດຂອງການອອກຈຳໜ່າຍຫຼັກຊັບ.

9. **ບໍລິສັດກວດສອບ ແມ່ນຫຍັງ?**

ບໍລິສັດກວດສອບ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບປະເພດໜຶ່ງ ຊຶ່ງບໍລິສັດກວດສອບໃນ ສປປ ລາວ ແມ່ນການຈັດຕັ້ງວິຊາຊີບການບັນຊີ ແລະ ກວດສອບຂອງນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກກະຊວງການເງິນ ແລະ ໄດ້ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ, ພ້ອມນັ້ນ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ ເສຍກ່ອນຈຶ່ງສາມາດດຳເນີນການໃຫ້ບໍລິການໃນຂົງເຂດວຽກງານຕະຫຼາດທຶນໄດ້.

ໂດຍພື້ນຖານແລ້ວ ໜ້າທີ່ຕົ້ນຕໍຂອງບໍລິສັດກວດສອບ ແມ່ນຊ່ວຍໃຫ້ບໍລິສັດລູກຄ້າສາມາດປະຕິບັດຕາມມາດຕະຖານສາກົນດ້ານການລາຍງານການເງິນ (International Financial Reporting Standard: IFRS) ແລະ ຢັ້ງຢືນຄວາມຖືກຕ້ອງຕໍ່ການກະກຽມ ແລະ ເປີດເຜີຍຂໍ້ມູນທາງການເງິນ ໂດຍສະເພາະແມ່ນເອກະສານລາຍງານການເງິນແຕ່ລະໄລຍະ.

ປະຈຸບັນໃນ ສປປ ລາວ ມີບໍລິສັດກວດສອບທີ່ໄດ້ຮັບການຮັບຮອງຈາກ ຄຄຊ ໃຫ້ດໍາເນີນທຸລະກິດກ່ຽວກັບວຽກງານການກວດສອບດ້ານຫຼັກຊັບ ທັງໝົດ 4 ບໍລິສັດ ຄື: ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີສ໌ ຈໍາກັດ, ບໍລິສັດ ເຄພີເອັມຈີລາວ ຈໍາກັດ, ບໍລິສັດ ເອີນແອນຢັງ (ລາວ) ຈໍາກັດ ແລະ ບໍລິສັດ ດີລອຍ ລາວ ຈໍາກັດຜູ້ດຽວ.

## 10. ທະນາຄານດູແລຊັບສິນ ແມ່ນຫຍັງ?

ທະນາຄານດູແລຊັບສິນ ແມ່ນ ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກຄະນະກໍາມະການຄຸ້ມຄອງຫຼັກຊັບ (ຄຄຊ) ໃຫ້ເຄື່ອນໄຫວເປັນຜູ້ດູແລຊັບສິນໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບ.

ທະນາຄານດູແລຊັບສິນ ມີໜ້າທີ່ເປັນຜູ້ໃຫ້ບໍລິການໃນການເກັບຮັກສາຂໍ້ມູນ, ຊັບສິນ ຂອງລູກຄ້າໃຫ້ປອດໄພ, ຊໍາລະເງິນ ຫຼື ຫຼັກຊັບ ຕາມຄໍາສັ່ງຂອງລູກຄ້າ, ໂອນບັນຊີຫຼັກຊັບ ແລະ ບັນຊີເງິນຂອງລູກຄ້າ ຈາກທະນາຄານດູແລຊັບສິນຂອງຕົນ ໄປຍັງທະນາຄານດູແລຊັບສິນອື່ນ ຕາມການສະເໜີຂອງລູກຄ້າ, ເປັນຜູ້ຕາງໜ້າໃຫ້ແກ່ລູກຄ້າເຂົ້າຮ່ວມແລະ ລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ ຕາມການມອບໝາຍຂອງລູກຄ້າ, ນອກນັ້ນ ກໍ່ຍັງມີໜ້າທີ່ໃນການແຈ້ງໃຫ້ລູກຄ້າຊາບກ່ຽວກັບຜົນການສະສາງ-ຊໍາລະທຸລະກໍາຫຼັກຊັບ ພາຍຫຼັງສິ້ນສຸດການຊື້-ຂາຍຫຼັກຊັບ, ຮັກສາຄວາມລັບກ່ຽວກັບຂໍ້ມູນຂອງລູກຄ້າ ແລະ ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ລະບຸໄວ້ໃນສັນຍາກັບລູກຄ້າ.

ປະຈຸບັນ ທະນາຄານດູແລຊັບສິນ ໃນ ສປປ ລາວ ມີ 1 ແຫ່ງ ຄື: ທະນາຄານກຸງເທບ ຈໍາກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ.

## 11. ບໍລິສັດບໍລິຫານຊັບສິນ ແມ່ນຫຍັງ?

ບໍລິສັດບໍລິຫານຊັບສິນ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບ ທີ່ດໍາເນີນທຸລະກິດກ່ຽວກັບການສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ, ພ້ອມທັງບໍລິຫານຊັບສິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ.

ໜ້າທີ່ຕົ້ນຕໍຂອງບໍລິສັດບໍລິຫານຊັບສິນ ແມ່ນ ດໍາເນີນການຂາຍ, ໄຖ່ຖອນຄືນໜ່ວຍລົງທຶນ ແລະ ຈົດທະບຽນໜ່ວຍລົງທຶນໃນຕະຫຼາດຫຼັກຊັບ; ປະຕິບັດກົດລະບຽບຂອງກອງທຶນຮ່ວມ, ສັນຍາດູແລຊັບສິນ, ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ແລະ ປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ; ດໍາເນີນການກວດສອບບັນຊີຂອງກອງທຶນຮ່ວມ, ລາຍງານ ແລະ ເປີດເຜີຍຂໍ້ມູນກ່ຽວກັບກອງທຶນຮ່ວມ; ປະຕິບັດລະບອບການບັນຊີ, ການກວດສອບ, ສະຖິຕິ ແລະ ພັນທະທາງການເງິນອື່ນໆ.

ປະຈຸບັນ ໃນ ສປປ ລາວ ຍັງບໍ່ທັນໄດ້ມີການສ້າງຕັ້ງ ບໍລິສັດບໍລິຫານຊັບສິນ. ແຕ່ອີງໃສ່ການພັດທະນາຢ່າງຕໍ່ເນື່ອງຂອງຕະຫຼາດທຶນລາວ, ເຊື່ອໝັ້ນວ່າໃນອານາຄົດອັນໃກ້ນີ້ ກໍ່ຈະມີການສ້າງຕັ້ງບໍລິສັດບໍລິຫານຊັບສິນຂຶ້ນຄືກັບບັນດາປະເທດໃນພາກພື້ນ ກໍ່ຄື ສາກົນຢ່າງແນ່ນອນ.

### 12. ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແມ່ນຫຍັງ?

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບ ທີ່ເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແກ່ກຸ່ມເປົ້າໝາຍທີ່ຕິດພັນກັບວຽກງານຫຼັກຊັບ ເປັນຕົ້ນແມ່ນ ບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ.

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືທີ່ດຳເນີນການເຄື່ອນໄຫວທຸລະກິດດ້ານຫຼັກຊັບ ສາມາດໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືແກ່ກຸ່ມເປົ້າໝາຍໄດ້ ຄື: ຈັດລຳດັບຄຸນນະພາບ ແລະ ຄວາມສ່ຽງຂອງຫຼັກຊັບ, ຈັດລຳດັບການຄຸ້ມຄອງບໍລິຫານ ແລະ ຈັດລຳດັບຖານະການເງິນ.

ປະຈຸບັນ ໃນ ສປປ ລາວ ຍັງບໍ່ທັນໄດ້ມີການສ້າງຕັ້ງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື. ແຕ່ອີງໃສ່ການພັດທະນາຢ່າງຕໍ່ເນື່ອງຂອງຕະຫຼາດທຶນລາວ, ເຊື່ອໝັ້ນວ່າໃນອານາຄົດອັນໃກ້ນີ້ ກໍ່ຈະມີການສ້າງຕັ້ງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຂຶ້ນຄືກັບບັນດາປະເທດໃນພາກພື້ນ ກໍ່ຄື ສາກົນຢ່າງແນ່ນອນ.

### 13. ສະມາຄົມທຸລະກິດຫຼັກຊັບ ແມ່ນຫຍັງ?

ສະມາຄົມທຸລະກິດຫຼັກຊັບ ແມ່ນໜຶ່ງໃນສະຖາບັນສື່ກາງດ້ານຫຼັກຊັບ, ຊຶ່ງແມ່ນການຈັດຕັ້ງທາງສັງຄົມ ທີ່ສ້າງຕັ້ງຂຶ້ນໂດຍສະຖາບັນສື່ກາງດ້າງຫຼັກຊັບ ບົນພື້ນຖານຄວາມສະໝັກໃຈ, ໂດຍການດຳເນີນການສົ່ງເສີມ, ພັດທະນາທຸລະກິດຫຼັກຊັບ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກສະມາຄົມ ໂດຍບໍ່ຫວັງຜົນກຳໄລ.

ໜ້າທີ່ຕົ້ນຕໍຂອງສະມາຄົມທຸລະກິດຫຼັກຊັບ ແມ່ນ ທຳການໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບທຸລະກິດຫຼັກຊັບໃຫ້ແກ່ສະມາຊິກ ແລະ ສັງຄົມ; ປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກ; ຄົ້ນຄວ້າ ແລະ ຍົກລະດັບຄວາມຮູ້ກ່ຽວກັບທຸລະກິດຫຼັກຊັບໃຫ້ແກ່ສະມາຊິກ; ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດຂອງສະມາຊິກ; ສ້າງກົດຈັນຍາບັນຂອງນັກວິຊາຊີບທຸລະກິດຫຼັກຊັບ.

ປະຈຸບັນ ໃນ ສປປ ລາວ ຍັງບໍ່ທັນໄດ້ມີການສ້າງຕັ້ງ ສະມາຄົມທຸລະກິດຫຼັກຊັບ. ແຕ່ອີງໃສ່ການພັດທະນາຢ່າງຕໍ່ເນື່ອງຂອງຕະຫຼາດທຶນລາວ, ເຊື່ອໝັ້ນວ່າໃນອານາຄົດອັນໃກ້ນີ້ ກໍ່ຈະມີການສ້າງຕັ້ງສະມາຄົມທຸລະກິດຫຼັກຊັບຂຶ້ນຄືກັບບັນດາປະເທດໃນພາກພື້ນ ກໍ່ຄື ສາກົນຢ່າງແນ່ນອນ.

### 14. ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນຫຍັງ?

ນັກວິຊາຊີບທຸລະກິດຫຼັກຊັບ ແມ່ນພະນັກງານຂອງບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານຊັບສິນ ທີ່ມີຄຸນວຸດທິການສຶກສາ, ປະສົບການ ແລະ ຜ່ານການກວດກາ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ວ່າມີເງື່ອນໄຂຄົບຖ້ວນໃນການເປັນນັກວິຊາຊີບທຸລະກິດຫຼັກຊັບ.

ນັກວິຊາຊີບທຸລະກິດຫຼັກຊັບ ປະກອບມີ 4 ປະເພດ ຄື:

- ນາຍໜ້າຊື້-ຂາຍຫຼັກຊັບ
- ທີ່ປຶກສາດ້ານການເງິນ
- ຜູ່ວິເຄາະຫຼັກຊັບ
- ຜູ່ບໍລິຫານກອງທຶນຮ່ວມ

ມາຮອດເດືອນ ມິຖຸນາ 2016 ມີນັກວິຊາຊີບທຸລະກິດຫຼັກຊັບ ທັງໝົດ 19 ຄົນ, ໃນນັ້ນ ປະກອບມີ ນາຍໜ້າຊື້-ຂາຍຫຼັກຊັບ 16 ຄົນ ແລະ ທີ່ປຶກສາດ້ານການເງິນ 3 ຄົນ.

**15. ໜ້າທີ່ຂອງນັກວິຊາຊີບທຸລະກິດຫຼັກຊັບ ແຕ່ລະປະເພດ**

ນັກວິຊາຊີບທຸລະກິດຫຼັກຊັບ ປະກອບດ້ວຍ 4 ປະເພດ ແຕ່ລະປະເພດມີໜ້າທີ່ ດັ່ງນີ້:

– **ນັກວິຊາຊີບທຸລະກິດຫຼັກຊັບປະເພດນາຍໜ້າຊື້-ຂາຍຫຼັກຊັບ** ສາມາດເຮັດໄດ້ 2 ໜ້າທີ່ ຄື: (1) ເຮັດໜ້າທີ່ເປັນສື່ກາງ ຫຼື ເປັນຕົວແທນ ເພື່ອດຳເນີນທຸລະກຳຊື້-ຂາຍຫຼັກຊັບ ຕາມຄຳສັ່ງ ຊື້-ຂາຍ ຫຼື ຍົກເລີກ ຂອງລູກຄ້າ; (2) ເຮັດໜ້າທີ່ໃນການຊື້-ຂາຍຫຼັກຊັບ ໃນນາມບໍລິສັດຫຼັກຊັບ ໂດຍໃຊ້ເງິນ ແລະ ຫຼັກຊັບ ຂອງບໍລິສັດຫຼັກຊັບ.

ນັກວິຊາຊີບທຸລະກິດຫຼັກຊັບປະເພດນາຍໜ້າຊື້-ຂາຍຫຼັກຊັບ ຈະບໍ່ສາມາດເຮັດໜ້າທີ່ທັງສອງໄດ້ໃນເວລາດຽວກັນ. ກໍລະນີ ບໍລິສັດຫຼັກຊັບ ຕ້ອງການປັບປ່ຽນໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວ ຕ້ອງລາຍງານຢ່າງເປັນລາຍລັກອັກສອນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າ ສາມສິບວັນ ກ່ອນຜູ້ກ່ຽວເລີ່ມປະຕິບັດວຽກງານຕົວຈິງ.

– **ນັກວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາດ້ານການເງິນ** ສາມາດເຮັດໄດ້ 2 ໜ້າທີ່ ຄື: (1) ໃຫ້ຄຳປຶກສາກ່ຽວກັບການກະກຽມຄວາມພ້ອມໃນການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ເຊັ່ນ: ການປັບປຸງໂຄງສ້າງດ້ານ ການຈັດຕັ້ງ, ການຄຸ້ມຄອງບໍລິຫານ, ດ້ານການເງິນ, ການເຄື່ອນໄຫວທຸລະກິດ ແລະ ອື່ນໆ; (2) ໃຫ້ຄຳປຶກສາໂດຍກົງແກ່ຜູ້ລົງທຶນ ກ່ຽວກັບການລົງທຶນໃສ່ຫຼັກຊັບ ຫຼື ກຸ່ມຫຼັກຊັບ ເຊັ່ນ: ການສ້າງຍຸດທະສາດການລົງທຶນໃສ່ຫຼັກຊັບ, ສະໜອງຂໍ້ມູນກ່ຽວກັບການວິເຄາະຫຼັກຊັບ ແລະ ທຸລະກິດຫຼັກຊັບ.

ນັກວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາດ້ານການເງິນ ຈະບໍ່ສາມາດເຮັດໜ້າທີ່ທັງສອງໄດ້ໃນເວລາດຽວກັນ. ກໍລະນີ ບໍລິສັດຫຼັກຊັບ ຕ້ອງການປັບປ່ຽນໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວ ຕ້ອງລາຍງານຢ່າງເປັນລາຍລັກອັກສອນ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າ ສາມສິບວັນ ກ່ອນຜູ້ກ່ຽວເລີ່ມປະຕິບັດວຽກງານຕົວຈິງ.

– **ນັກວິຊາຊີບທຸລະກິດຫຼັກຊັບປະເພດນັກວິເຄາະຫຼັກຊັບ** ສາມາດຄົ້ນຄວ້າ ແລະ ປະເມີນ ສະພາບເສດຖະກິດຂອງປະເທດໂດຍລວມ, ຂະແໜງການ ແລະ ວິເຄາະຫຼັກຊັບຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ.

– **ນັກວິຊາຊີບທຸລະກິດຫຼັກຊັບປະເພດຜູ່ບໍລິຫານກອງທຶນຮ່ວມ** ສາມາດຕັດສິນໃຈການລົງທຶນໃນຫຼັກຊັບ ຫຼື ຊັບສິນ ໂດຍຕ້ອງໃຫ້ສອດຄ່ອງກັບຈຸດປະສົງ ແລະ ນະໂຍບາຍການລົງທຶນ ທີ່ໄດ້ກຳນົດໄວ້ໃນລະບຽບ ຫຼື ສັນຍາການຄຸ້ມຄອງບໍລິຫານຊັບສິນ.

**16. ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແມ່ນບໍລິສັດແນວໃດ?**

ບໍລິສັດອອກຈຳໜ່າຍຫຼັກຊັບ ໝາຍເຖິງ ບໍລິສັດໃດໜຶ່ງທີ່ໄດ້ຜ່ານການຮັບຮອງຈາກອົງການຄຸ້ມຄອງວຽກງານຫຼັກຊັບ (ໃນ ສປປ ລາວ ແມ່ນ ຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼືຂຽນຫຍໍ້ວ່າ: ຄຄຊ) ໃຫ້ລະດົມທຶນຜ່ານຕະຫຼາດທຶນ ໂດຍການນຳເອົາຫຼັກຊັບຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ບໍລິສັດຈົດທະບຽນ ໝາຍເຖິງ ບໍລິສັດອອກຈຳໜ່າຍຫຼັກຊັບ ໃດໜຶ່ງທີ່ໄດ້ນຳເອົາຫຼັກຊັບຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ສຳເລັດ ແລະ ນຳຫຼັກຊັບຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ.

ປະຈຸບັນໃນ ສປປ ລາວ ມີ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ 5 ບໍລິສັດ ຄື: ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ), ບໍລິສັດ ລາວ

ເວີນ ມະຫາຊົນ (ລວມຊ), ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ປທລ) ແລະ ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (ສ.ວ.ນ).

**17. ການອອກຈຳໜ່າຍຫຼັບຊັບ ແມ່ນຫຍັງ?**

ການອອກຈຳໜ່າຍຫຼັກຊັບ ແມ່ນ ການນຳເອົາຫຼັກຊັບຂອງບໍລິສັດອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອຈຸດປະສົງໃດໜຶ່ງ ຄື:

- ເພີ່ມທຶນ ຫຼື ລະດົມທຶນ ເພື່ອຂະຫຍາຍກິດຈະການ;
- ປ່ຽນແປງໂຄງສ້າງການຖືຮຸ້ນ;
- ຈ່າຍຮຸ້ນ ເພື່ອປັນຜົນ ຫຼື ໃຫ້ເປັນລາງວັນ;
- ເພື່ອຈຸດປະສົງອື່ນ ຕາມການກຳນົດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ).

ການອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ.

**18. ຮູບແບບການອອກຈຳໜ່າຍຫຼັກຊັບ ແມ່ນແນວໃດ?**

ການອອກຈຳໜ່າຍຫຼັກຊັບ ປະກອບດ້ວຍ 3 ຮູບແບບ ຄື: ໃຫ້ແກ່ມວນຊົນ; ໃນວົງຈຳກັດ ແລະ ໃຫ້ແກ່ຜູ້ຖືຮຸ້ນເດີມ. ແຕ່ລະຮູບແບບຂອງການອອກຈຳໜ່າຍຫຼັກຊັບ ມີລາຍລະອຽດດັ່ງນີ້:

- ການອອກຈຳໜ່າຍຫຼັກຊັບ ໃຫ້ແກ່ມວນຊົນ ແມ່ນ ການອອກຈຳໜ່າຍຫຼັກຊັບຄັ້ງທຳອິດ ຫຼື ອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ, ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດໜຶ່ງ ຊຶ່ງມີຜູ້ລົງທຶນຫຼາຍກວ່າ ໜຶ່ງຮ້ອຍ ຂຶ້ນໄປ.
- ການອອກຈຳໜ່າຍຫຼັກຊັບໃນວົງຈຳກັດ ແມ່ນ ການອອກຈຳໜ່າຍຫຼັກຊັບໃຫ້ແກ່ຜູ້ລົງທຶນຍຸດທະສາດ, ຜູ້ລົງທຶນປະເພດສະຖາບັນ ແລະ ບຸກຄົນ ຊຶ່ງມີຈຳນວນຜູ້ລົງທຶນ ແຕ່ ສາມສິບ ຫາ ໜຶ່ງຮ້ອຍ.
- ການອອກຈຳໜ່າຍຫຼັກຊັບໃຫ້ແກ່ຜູ້ຖືຮຸ້ນເດີມ ແມ່ນ ການອອກຈຳໜ່າຍຫຼັກຊັບໂດຍໃຫ້ບູລິມະສິດແກ່ຜູ້ຖືຮຸ້ນເດີມ ໃນການຊື້ຫຼັກຊັບຂອງບໍລິສັດໃນອັດຕາສ່ວນ ແລະ ວິທີການແບ່ງປັນ ຕາມມະຕິກອງປະຊຸມຜູ້ຖືຮຸ້ນ.

**19. ບໍລິສັດທີ່ຕ້ອງການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ຕ້ອງປະຕິບັດເງື່ອນໄຂໃດແດ່?**

ຖ້າບໍລິສັດມີຄວາມຕ້ອງການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ກ່ອນອື່ນໝົດຕ້ອງໄດ້ປະຕິບັດຕາມ **"ກົດໝາຍວ່າດ້ວຍຫຼັກຊັບ"** ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ **"ລະບຽບການວ່າດ້ວຍການອອກຈຳໜ່າຍຮຸ້ນ"** ແລະ **"ລະບຽບການວ່າດ້ວຍການອອກຈຳໜ່າຍຮຸ້ນກູ້"** ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

- ກ່ອນອື່ນໝົດ ບໍລິສັດຕ້ອງຫັນເປັນຮູບແບບບໍລິສັດມະຫາຊົນເສຍກ່ອນ ໝາຍວ່າ ບໍລິສັດຕ້ອງມີຜູ້ຖືຮຸ້ນ 100 ຄົນ ຂຶ້ນໄປ. ພ້ອມນັ້ນ, ໃນສະມາຊິກສາພາບໍລິຫານທັງໝົດ ຕ້ອງມີສະມາຊິກອິດສະລະຢ່າງໜ້ອຍ 1 ສ່ວນ 3 ແລະ ມີຄະນະກຳມະການກວດກາພາຍໃນຄັກແນ່;
- ບໍລິສັດ ຕ້ອງກະກຽມເອກະສານຕ່າງໆ ຄື: ຄຳຮ້ອງຂໍອະນຸຍາດອອກຈຳໜ່າຍຫຼັກຊັບ, ສຳເນົາໃບຢັ້ງຢືນເສຍອາກອນ, ກົດລະບຽບຂອງບໍລິສັດ, ມະຕິກອງປະຊຸມຜູ້ຖືຮຸ້ນ, ບັນຊີລາຍຊື່ຜູ້ຖືຮຸ້ນແຕ່ 1/100 ຂຶ້ນໄປ, ໜັງສືຊວນຊື້, ສັນຍາຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ແຜນການນຳໃຊ້ທຶນ ຊຶ່ງຕ້ອງໄດ້ຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ, ມີເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງ ຈາກບໍລິສັດກວດສອບໜຶ່ງປີຄືນຫຼັງນັບແຕ່ປີຍື່ນຄຳຮ້ອງ ແລະ ປີສຸດທ້າຍກ່ອນວັນຍື່ນຄຳຮ້ອງ;

- ນອກຈາກນີ້, ຜູ້ບໍລິຫານບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໝັ້ນໃຈວ່າ ບໍລິສັດຕົນມີຄວາມສາມາດຮອບດ້ານໃນການດຳເນີນທຸລະກິດ ເປັນຕົ້ນແມ່ນ ຄວາມສາມາດໃນການສ້າງກຳໄລ, ບໍ່ມີໜີ້ສິນຄຸມເຄືອ, ປະຕິບັດຕາມຄຳໝັ້ນສັນຍາຕໍ່ຜູ້ຖືຮຸ້ນ ເຊັ່ນ: ເງິນປັນຜົນ, ສິດໃນການຊື້ຫຼັກຊັບໃນກໍລະນີທີ່ບໍລິສັດອອກຈຳໜ່າຍຮຸ້ນເພີ່ມ, ເປີດເຜີຍຂໍ້ມູນການດຳເນີນທຸລະກິດໃນແຕ່ລະໄລຍະ, ສິດໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງເປັນຕົ້ນ. ພ້ອມນັ້ນ, ບໍລິສັດດັ່ງກ່າວ ຕ້ອງບໍ່ປ່ຽນແປງປະເພດການດຳເນີນທຸລະກິດຕົ້ນຕໍໃນໄລຍະ ສາມປີ ຜ່ານມາ.

ທັງໝົດນັ້ນ ກໍ່ແມ່ນເງື່ອນໄຂທີ່ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ຄຳນຶງ ແລະ ພິຈາລະນາ ເພື່ອຄວາມສຳເລັດໃນການອອກຈຳໜ່າຍຫຼັກຊັບຂອງຕົນ.

### 20. ການກະກຽມຄວາມພ້ອມຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນມີຄືແນວໃດແດ່?

ເພື່ອຮັບປະກັນການອອກຈຳໜ່າຍຫຼັກຊັບໃຫ້ປະສົບຜົນສຳເລັດໃນໄລຍະເວລາ, ລາຄາຫຼັກຊັບ ແລະ ຈຳນວນຫຼັກຊັບ ທີ່ກຳນົດໄວ້ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ສົມທົບກັບຫຼາຍພາກສ່ວນ ດັ່ງນີ້:

- ບໍລິສັດທີ່ປຶກສາກົດໝາຍ ເພື່ອຊ່ວຍໃນການກະກຽມໜັງສືຊວນຊື້;
- ທີ່ປຶກສາທາງການເງິນ(ໂດຍທົ່ວໄປແລ້ວແມ່ນບໍລິສັດຫຼັກຊັບທີ່ເຮັດໜ້າທີ່ເປັນທີ່ປຶກສາທາງການເງິນ) ເພື່ອຊ່ວຍວາງແຜນ ແລະ ສ້າງເອກະສານລາຍງານການເງິນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຄວາມເປັນຈິງໃນອານາຄົດ ແລະ ຊ່ວຍວາງແຜນການໂຄສະນາຕໍ່ມວນຊົນ (Road Show) ເພື່ອໃຫ້ມວນຊົນສາມາດເຂົ້າເຖິງແຫຼ່ງຂໍ້ມູນຂອງບໍລິສັດດັ່ງກ່າວໄດ້ທົ່ວເຖິງຂຶ້ນ ແລະ ເພື່ອຮັບປະກັນການອອກຈຳໜ່າຍຫຼັກຊັບທີ່ປະສົບຜົນສຳເລັດ;
- ບໍລິສັດກວດສອບພາຍນອກ ເພື່ອຊ່ວຍຢັ້ງຢືນຄວາມຖືກຕ້ອງ ແລະ ສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງຂອງບັນດາເອກະສານລາຍງານການເງິນຕ່າງໆ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ລົງທຶນວ່າ ຂໍ້ມູນທາງການເງິນດັ່ງກ່າວແມ່ນໄດ້ຮັບການຢັ້ງຢືນແລ້ວ;
- ຜູ້ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ (ໂດຍທົ່ວໄປແມ່ນບໍລິສັດຫຼັກຊັບທີ່ເຮັດໜ້າທີ່ເປັນຜູ້ຄໍ້າປະກັນການອອກຈຳໜ່າຍຫຼັກຊັບ) ເພື່ອຊ່ວຍໃນການຮັບປະກັນການອອກຈຳໜ່າຍຫຼັກຊັບໃຫ້ປະສົບຜົນສຳເລັດຕາມການກຳນົດຂອງອົງການຄຸ້ມຄອງວຽກງານຫຼັກຊັບ.

### 21. ບໍລິສັດອອກຈຳໜ່າຍຫຼັກຊັບຈະໄດ້ຮັບຜົນປະໂຫຍດຫຍັງແດ່?

ຫຼັງຈາກບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບສຳເລັດການອອກຈຳໜ່າຍຫຼັກຊັບຂອງຕົນໃຫ້ແກ່ມວນຊົນ ແມ່ນຈະໄດ້ຮັບຜົນປະໂຫຍດຕ່າງໆ ດັ່ງນີ້:

- ບໍລິສັດອອກຈຳໜ່າຍຫຼັກຊັບຈະມີຊ່ອງທາງໃນການລະດົມທຶນໄລຍະຍາວ ແລະ ສາມາດລະດົມທຶນໄດ້ປະລິມານທີ່ຫຼວງຫຼາຍ ດ້ວຍຕົ້ນທຶນທີ່ສົມເຫດສົມຜົນ, ເຮັດໃຫ້ບໍລິສັດມີຖານະການເງິນດີ ແລະ ເຂັ້ມແຂງ;
- ບໍລິສັດຈະໄດ້ຮັບຜົນປະໂຫຍດດ້ານອາກອນ, ຊຶ່ງປະຈຸບັນເພື່ອດຶງດູດໃຫ້ມີບໍລິສັດອອກຈຳໜ່າຍຫຼັກຊັບເພີ່ມຂຶ້ນ ລັດຖະບານລາວຈຶ່ງໄດ້ຫຼຸດອາກອນກຳໄລຂອງບໍລິສັດທີ່ທຳການອອກຈຳໜ່າຍຫຼັກຊັບລົງ 5% ເປັນເວລາ 4 ປີ ຕິດຕໍ່ກັນ ຫຼັງຈາກຈົດທະບຽນໃນຕະຫຼາດຫຼັກຊັບ;
- ການດຳເນີນທຸລະກິດມີຄວາມໂປ່ງໃສ ແລະ ມີປະສິດທິພາບ ເຮັດໃຫ້ຊື່ສຽງ ແລະ ພາບພົດຂອງບໍລິສັດສູງຂຶ້ນ ແລະ ສາມາດແຂ່ງຂັນໄດ້;
- ສາມາດລະດົມແນວຄວາມຄິດໄດ້ຈາກຫຼາຍຂາຮຸ້ນ ເຮັດໃຫ້ຫຼຸດຜ່ອນຄວາມສ່ຽງໃນການດຳເນີນທຸລະກິດ.

## 22. ຫຼັກຊັບທີ່ຊື້-ຂາຍໃນຕະຫຼາດທຶນ

ອີງຕາມລະດັບການພັດທະນາຂອງຕະຫຼາດທຶນໃນແຕ່ລະປະເທດ, ຜະລິດຕະພັນທີ່ມີໃນຕະຫຼາດທຶນກໍ່ຈະມີຜະລິດ ຕະພັນທີ່ແຕກຕ່າງກັນ. ໂດຍທົ່ວໄປແລ້ວ ຜະລິດຕະພັນທີ່ນໍາມາຊື້-ຂາຍໃນຕະຫຼາດທຶນ ປະກອບມີ: ຮຸ້ນສາມັນ (Common Stock), ຮຸ້ນບູລິມະສິດ (Preferred Stock), ພັນທະບັດລັດຖະບານ (Government Bond), ຮຸ້ນກູ້ (Corporate Bond), ສັນຍາຊື້-ຂາຍລ່ວງໜ້າ (Futures), ສັນຍາສິດ (Options), ໃບສະແດງສິດໃນການຊື້ຫຼັກຊັບ (Warrant) ແລະ ຜະລິດຕະພັນອື່ນໆ.

ປະຈຸບັນ ຜະລິດຕະພັນທີ່ທໍາການຊື້-ຂາຍໃນຕະຫຼາດຫຼັກຊັບລາວ (ຕລຊລ) ມີພຽງແຕ່ ຮຸ້ນສາມັນ, ຊຶ່ງປະກອບມີຮຸ້ນຂອງ 5 ບໍລິສັດ ຄື: ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ), ບໍລິສັດ ລາວເວີນ ມະຫາຊົນ (ລວມຊ), ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ປທລ) ແລະ ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (ສ.ວ.ນ).

## 23. ຮຸ້ນສາມັນແມ່ນຫຍັງ?

ຮຸ້ນສາມັນ (Common Stock): ແມ່ນຜະລິດຕະພັນທາງການເງິນປະເພດທຶນ ທີ່ອອກໂດຍບໍລິສັດມະຫາຊົນ ທີ່ຕ້ອງການລະດົມທຶນຈາກປະຊາຊົນ, ຊຶ່ງຜູ້ຖື "ຮຸ້ນສາມັນ" ຈະມີຖານະເປັນເຈົ້າຂອງບໍລິສັດ, ມີສິດໃນການອອກສຽງລົງມະຕິໃນກອງປະຊຸມຜູ້ຖືຮຸ້ນ ຕາມອັດຕາສ່ວນຮ້ອຍ (%) ຂອງຮຸ້ນສາມັນ ທີ່ຕົນຖືຄອງຢູ່ ຫຼືເວົ້າອີກຢ່າງໜຶ່ງ ກໍ່ແມ່ນມີສິດເຂົ້າຮ່ວມເປັນຜູ້ຕັດສິນໃນບັນຫາສໍາຄັນໃນກອງປະຊຸມຜູ່ຖືຮຸ້ນ ເປັນຕົ້ນແມ່ນ ການເພີ່ມທຶນ, ການຈ່າຍເງິນປັນຜົນ ຫຼື ການຄວບບໍລິສັດ ແລະ ອື່ນໆ. ນອກຈາກນີ້, ຜູ່ຖືຮຸ້ນສາມັນຍັງມີສິດໄດ້ຮັບເງິນປັນຜົນ ເມື່ອບໍລິສັດມີກໍາໄລ, ມີໂອກາດໄດ້ຮັບກໍາໄລ ຫຼື ຂາດທຶນ ຈາກສ່ວນຕ່າງຂອງລາຄາຮຸ້ນ ເມື່ອລາຄາຮຸ້ນດັ່ງກ່າວມີການປັບຕົວສູງຂຶ້ນ ຫຼື ຫຼຸດລົງ ພ້ອມທັງມີໂອກາດໄດ້ຮັບສິດໃນການຈອງຊື້ຮຸ້ນອອກໃໝ່ ໃນກໍລະນີທີ່ບໍລິສັດອອກຮຸ້ນເພີ່ມທຶນ ແລະ ສິດ ອື່ນໆອີກ.

ປະຈຸບັນຮຸ້ນສາມັນທີ່ຈົດທະບຽນ ແລະ ທໍາການຊື້-ຂາຍຢູ່ຕະຫຼາດຫຼັກຊັບລາວ (ຕລຊລ) ປະກອບມີ 5 ບໍລິສັດ ຄື: ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ), ບໍລິສັດ ລາວເວີນ ມະຫາຊົນ (ລວມຊ), ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະ ຫາຊົນ (ປທລ) ແລະ ບໍລິສັດ ສຸວັນນີໂຮມເຊັນເຕີ ມະຫາຊົນ (ສ.ວ.ນ).

## 24. ຖ້າຕ້ອງການຊື້-ຂາຍຮຸ້ນຕ້ອງເຮັດແນວໃດແດ່?

ຖ້າທ່ານຕ້ອງການຊື້-ຂາຍຮຸ້ນ ຢູ່ ຕະຫຼາດຫຼັກຊັບລາວ (ຕລຊລ) ທ່ານຕ້ອງໄດ້ເປີດ 2 ບັນຊີ ຄື: ບັນຊີເງິນຝາກ (ກະແສລາຍວັນ ຫຼື ເງິນຝາກປະຢັດ) ແລະ ບັນຊີຫຼັກຊັບ.

- ຖ້າທ່ານເປີດບັນຊີຫຼັກຊັບກັບ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ ທ່ານຕ້ອງເປີດບັນຊີເງິນກັບ ທະນາຄານພັດທະນາລາວ;
- ຖ້າທ່ານເປີດບັນຊີຫຼັກຊັບກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ ຫຼື ບໍລິສັດຫຼັກຊັບ ລາວ-ຈີນ ຈໍາກັດ ທ່ານຕ້ອງເປີດບັນຊີເງິນກັບ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ.

**25. ການເປີດບັນຊີຊື້-ຂາຍຮຸ້ນຂອງຜູ້ລົງທຶນ**

ຖ້າທ່ານຕ້ອງການຊື້ຮຸ້ນ-ຂາຍຮຸ້ນ ຢູ່ ຕະຫຼາດຫຼັກຊັບລາວ (ຕລຊລ) ທ່ານຕ້ອງໄດ້ເປີດ 2 ບັນຊີ ຄື: ບັນຊີເງິນຝາກ (ກະແສລາຍວັນ ຫຼື ເງິນຝາກປະຢັດ) ແລະ ບັນຊີຫຼັກຊັບ ຕາມຂັ້ນຕອນ[1] ດັ່ງລຸ່ມນີ້:

❖ **ເປີດບັນຊີເງິນຝາກ (ເງິນກີບ):**

1) ສໍາລັບບຸກຄົນລາວ:
- ສໍາເນົາບັດປະຈໍາຕົວ ຫຼື ສໍາມະໂນຄົວ.

2) ສໍາລັບນິຕິບຸກຄົນລາວ:
- ສໍາເນົາບັດປະຈໍາຕົວ ແລະ/ຫຼື ສໍາມະໂນຄົວ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ທີ່ຖືກມອບສິດໃຫ້ເປັນຕົວແທນ;
- ສໍາເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ (ສະບັບປີລ້າສຸດ);
- ໃບມອບສິດ (ຖ້າມີ).

3) ສໍາລັບບຸກຄົນຕ່າງປະເທດ:
- ສໍາເນົາໜັງສືເດີນທາງ ແລະ ບັດແຮງງານ ຢູ່ ສປປ ລາວ (ໃນກໍລະນີບໍ່ອາໃສຢູ່ ສປປ ລາວ ແມ່ນບໍ່ຈໍາເປັນຕ້ອງມີບັດແຮງງານ ຢູ່ ສປປ ລາວ);
- "ໃບຢັ້ງຢືນຂຶ້ນທະບຽນຂອງຜູ້ລົງທຶນຕ່າງປະເທດ" ທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ (ໃນກໍລະນີບໍ່ອາໃສຢູ່ ສປປ ລາວ).

4) ສໍາລັບນິຕິບຸກຄົນຕ່າງປະເທດ:
- ສໍາເນົາບັດປະຈໍາຕົວ ແລະ/ຫຼື ສໍາມະໂນຄົວ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ທີ່ຖືກມອບສິດໃຫ້ເປັນຕົວແທນ;
- ສໍາເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ (ສະບັບປີລ້າສຸດ);
- ສໍາເນົາໃບອະນຸຍາດລົງທຶນຕ່າງປະເທດ (ໃນກໍລະນີ ນິຕິບຸກຄົນເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ);
- "ໃບຢັ້ງຢືນຂຶ້ນທະບຽນຂອງຜູ້ລົງທຶນຕ່າງປະເທດ" ທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ (ໃນກໍລະນີບໍ່ອາໃສຢູ່ ສປປ ລາວ);
- ໃບມອບສິດ (ຖ້າມີ).

❖ **ເປີດບັນຊີຫຼັກຊັບ:**

1) ສໍາລັບບຸກຄົນລາວ:
- ສໍາເນົາບັດປະຈໍາຕົວ 1 ສະບັບ;
- ສໍາເນົາປຶ້ມບັນຊີເງິນຝາກກະແສລາຍວັນ ຫຼື ເງິນຝາກປະຢັດ ທີ່ເປີດກັບທະນາຄານຕົວແທນ 1 ສະບັບ;
- ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ 3 ສະບັບ.

2) ສໍາລັບນິຕິບຸກຄົນລາວ:
- ມະຕິກອງປະຊຸມສະພາບໍລິຫານໃຫ້ເປີດບັນຊີຫຼັກຊັບກັບບໍລິສັດຫຼັກຊັບ (ຍົກເວັ້ນບໍລິສັດຈໍາກັດຜູ້ດຽວ) 1 ສະບັບ;
- ລາຍຊື່ຄະນະບໍລິຫານ ຫຼື ຜູ້ມີອໍານາດລົງລາຍເຊັນຂອງບໍລິສັດ 1 ສະບັບ;
- ສໍາເນົາບັດປະຈໍາຕົວຜູ້ອໍານວຍການ ພ້ອມເຊັນຢັ້ງຢືນສໍາເນົາຖືກຕ້ອງຈາກເຈົ້າຂອງບັດ 2 ສະບັບ;

[1] ອີງຕາມຂໍ້ມູນການເປີດບັນຊີເງິນຝາກ ແລະ ບັນຊີຫຼັກຊັບ ຈາກ: www.bcel-kt.com

- ສຳເນົາບັດປະຈຳຕົວຂອງຜູ່ມີອຳນາດລົງລາຍເຊັນ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ 2 ສະບັບ (ໃນກໍລະນີຜູ້ມີອຳນາດລົງລາຍເຊັນບໍ່ແມ່ນຜູ້ອຳນວຍການ);
- ສຳເນົາບັດປະຈຳຕົວຂອງຜູ່ໄດ້ຮັບສິດໃນການເຄື່ອນໄຫວບັນຊີຫຼັກຊັບ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ 2 ສະບັບ (ໃນກໍລະນີ ຜູ່ເຄື່ອນໄຫວບັນຊີຫຼັກຊັບບໍ່ແມ່ນຜູ່ອຳນວຍການ);
- ສຳເນົາໃບທະບຽນວິສາຫະກິດ ຫຼື ໃບທະບຽນກອງທຶນ (ໃນກໍລະນີເປັນກອງທຶນ) ເຊັນຢັ້ງຢືນສຳເນົາຖືກຕ້ອງກັບສະບັບແທ້ໂດຍຜູ່ອຳນວຍການ ຫຼື ຜູ່ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ;
- ສຳເນົາກົດລະບຽບພາຍໃນຂອງບໍລິສັດເຊັນຜູ່ອຳນວຍການ ແລະ ຈ້ຳກາບໍລິສັດເຊັນຢັ້ງຢືນສຳເນົາຖືກ ຕ້ອງກັບສະບັບແທ້ໂດຍຜູ່ອຳນວຍການ ຫຼື ຜູ່ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ;
- ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ ເຊັນຜູ່ອຳນວຍການ ຫຼື ຜູ່ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 3 ສະບັບ;
- ໃບຄຳຮ້ອງຂໍເປີດບັນຊີຫຼັກຊັບ ເຊັນໂດຍຜູ່ອຳນວຍການ ຫຼື ຜູ່ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ;
- ສຳເນົາປຶ້ມບັນຊີເງິນຝາກກະແສລາຍວັນ ຫຼື ເງິນຝາກປະຢັດ ທີ່ເປີດກັບທະນາຄານຕົວແທນ 1 ສະບັບ;
- ໃບມອບສິດໃຫ້ຜູ່ຕ່າງໜ້າມາເປີດບັນຊີແທນເຊັນຜູ່ອຳນວຍການ ຫຼື ຜູ່ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ (ໃນກໍລະນີໃຫ້ພະນັກງານເປັນຜູ່ທຳການເປີດບັນຊີແທນ);
- ບັດປະຈຳຕົວຜູ່ໄດ້ຮັບສິດໃນການເປີດບັນຊີ ພ້ອມລາຍເຊັນ ຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ 1 ສະບັບ.

3) ສຳລັບບຸກຄົນຕ່າງປະເທດ:

- ສຳເນົາໜັງສືຜ່ານແດນ ເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງໜັງສືເດີນທາງ 2 ສະບັບ;
- ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ 4 ສະບັບ;
- "ໃບຢັ້ງຢືນການຂຶ້ນທະບຽນຂອງຜູ່ລົງທຶນຕ່າງປະເທດ" ທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ 1 ສະບັບ;
- ໃບຄຳຮ້ອງຂໍເປີດບັນຊີຫຼັກຊັບ 1 ສະບັບ;
- ສຳເນົາປຶ້ມບັນຊີເງິນຝາກກະແສລາຍວັນ ຫຼື ເງິນຝາກປະຢັດ ທີ່ເປີດກັບທະນາຄານຕົວແທນ 1 ສະບັບ.

4) ສຳລັບນິຕິບຸກຄົນຕ່າງປະເທດ:

- "ໃບຢັ້ງຢືນການຂຶ້ນທະບຽນຂອງຜູ່ລົງທຶນຕ່າງປະເທດ" ທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ 1 ສະບັບ;
- ມະຕິກອງປະຊຸມສະພາບໍລິຫານໃຫ້ເປີດບັນຊີຫຼັກຊັບກັບບໍລິສັດຫຼັກຊັບ (ຍົກເວັ້ນບໍລິສັດຈຳກັດຜູ່ດຽວ) 1 ສະບັບ;
- ລາຍຊື່ຄະນະບໍລິຫານ ຫຼື ຜູ່ມີອຳນາດລົງລາຍເຊັນຂອງບໍລິສັດ 1 ສະບັບ;
- ສຳເນົາບັດປະຈຳຕົວຜູ່ອຳນວຍການ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ (ສຳເນົາຮູບໃຫ້ຊັດເຈນ) 2 ສະບັບ;
- ສຳເນົາບັດປະຈຳຕົວຂອງຜູ່ມີອຳນາດລົງລາຍເຊັນ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ (ສຳເນົາຮູບໃຫ້ຊັດເຈນ) 2 ສະບັບ (ໃນກໍລະນີຜູ້ມີອຳນາດລົງລາຍເຊັນບໍ່ແມ່ນຜູ້ອຳນວຍການ);
- ສຳເນົາບັດປະຈຳຕົວຂອງຜູ່ໄດ້ຮັບສິດໃນການເຄື່ອນໄຫວບັນຊີຫຼັກຊັບ ພ້ອມເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ (ສຳເນົາຮູບໃຫ້ຊັດເຈນ) 2 ສະບັບ (ໃນກໍລະນີ, ຜູ່ເຄື່ອນໄຫວບັນຊີຫຼັກຊັບບໍ່ແມ່ນຜູ້ອຳນວຍການ );
- ສຳເນົາໃບທະບຽນວິສາຫະກິດ ຫຼື ໃບທະບຽນກອງທຶນ ( ໃນກໍລະນີເປັນກອງທຶນ ) ເຊັນຢັ້ງຢືນສຳເນົາຖືກຕ້ອງກັບສະບັບແທ້ໂດຍຜູ່ອຳນວຍການ ຫຼື ຜູ່ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ;

- ສຳເນົາກົດລະບຽບພາຍໃນຂອງບໍລິສັດເຊັນຜູ້ອຳນວຍການ ແລະ ຈ້ຳກາບໍລິສັດເຊັນຢັ້ງຢືນສຳເນົາຖືກ ຕ້ອງກັບສະບັບແທ້ໂດຍຜູ້ອຳນວຍການ ຫຼື ຜູ້ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ;
- ສັນຍາແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ ເຊັນຜູ້ອຳນວຍການ ຫຼື ຜູ້ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 3 ສະບັບ;
- ໃບຄຳຮ້ອງຂໍເປີດບັນຊີຫຼັກຊັບ ເຊັນໂດຍຜູ້ອຳນວຍການ ຫຼື ຜູ້ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ;
- ສຳເນົາປຶ້ມບັນຊີເງິນຝາກກະແສລາຍວັນ ຫຼື ເງິນຝາກປະຢັດ ທີ່ເປີດກັບທະນາຄານຕົວແທນ 1 ສະບັບ;
- ໃບມອບສິດໃຫ້ຜູ້ຕ່າງໜ້າມາເປີດບັນຊີແທນເຊັນຜູ້ອຳນວຍການ ຫຼື ຜູ້ມີອຳນາດລົງລາຍເຊັນ ແລະ ຈ້ຳກາບໍລິສັດ 1 ສະບັບ ( ໃນກໍລະນີ ໃຫ້ພະນັກງານເປັນຜູ້ທຳການເປີດບັນຊີແທນ );
- ບັດປະຈຳຕົວຜູ້ໄດ້ຮັບສິດໃນການເປີດບັນຊີ ພ້ອມລາຍເຊັນຢັ້ງຢືນສຳເນົາຖືກຕ້ອງຈາກເຈົ້າຂອງບັດ 1 ສະບັບ.

ການເປີດບັນຊີເງິນຝາກ ແລະ ບັນຊີຫຼັກຊັບ ຜູ້ລົງທຶນສາມາດຍື່ນເອກະສານຂໍເປີດບັນຊີເຫຼົ່ານັ້ນດ້ວຍຕົນເອງ ຫຼື ມອບສິດໃຫ້ທະນາຄານດູແລຊັບສິນໃນການເປີດບັນຊີເງິນຝາກ ແລະ ບັນຊີຫຼັກຊັບ ແທນຕົນໄດ້. ພາຍຫຼັງຜູ້ລົງທຶນມີບັນຊີເງິນຝາກ ແລະ ບັນຊີຫຼັກຊັບເປັນທີ່ຮຽບຮ້ອຍແລ້ວ ຜູ້ລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍນຳບໍລິສັດຫຼັກຊັບໂດຍຜ່ານ 4 ຊ່ອງທາງ ຄື: ສົ່ງຄຳສັ່ງຊື້-ຂາຍຮຸ້ນໂດຍກົງທີ່ໜ່ວຍບໍລິການຂອງບໍລິສັດຫຼັກຊັບ; ສົ່ງຄຳສັ່ງຊື້-ຂາຍຮຸ້ນຜ່ານທາງໂທລະສັບ ຫຼື ໂທລະສານ; ສົ່ງຄຳສັ່ງຊື້-ຂາຍຮຸ້ນຜ່ານທາງອີເມວ ແລະ ສົ່ງຄຳສັ່ງຊື້-ຂາຍຮຸ້ນຜ່ານລະບົບຊື້-ຂາຍຮຸ້ນກັບທີ່ (Home Trading System).

## 26. ຊ່ອງທາງໃນການສົ່ງຄຳສັ່ງຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ

ຊ່ອງທາງໃນການສົ່ງຄຳສັ່ງຊື້-ຂາຍຮຸ້ນ ຢູ່ຕະຫຼາດຫຼັກຊັບລາວ ປະກອບມີ 4 ຊ່ອງທາງ ຄື:

- **ສົ່ງຄຳສັ່ງຜ່ານພະນັກງານໂດຍກົງ**: ຜູ້ລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍຮຸ້ນຜ່ານນາຍໜ້າຊື້-ຂາຍຮຸ້ນໂດຍກົງທີ່ຈຸດບໍລິການຂອງບໍລິສັດຫຼັກຊັບ;
- **ສົ່ງຄຳສັ່ງຜ່ານທາງໂທລະສັບ:** ຜູ້ລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍຮຸ້ນຜ່ານທາງໂທລະສັບຂອງບໍລິສັດຫຼັກຊັບທີ່ທ່ານໃຊ້ບໍລິການ;
- **ສົ່ງຄຳສັ່ງຜ່ານທາງ ອີເມລ໌:** ຜູ້ລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍຮຸ້ນຜ່ານທາງ ອີເມລ໌ ຂອງນາຍໜ້າຊື້-ຂາຍຮຸ້ນທີ່ທ່ານໃຊ້ບໍລິການ;
- **ສົ່ງຄຳສັ່ງຜ່ານທາງ "ລະບົບຊື້-ຂາຍກັບທີ່ (Home Trading System, HTS)":** ຜູ້ລົງທຶນຕ້ອງລົງທະບຽນນຳໃຊ້ HTS ທີ່ຈຸດບໍລິການ. ຫຼັງຈາກຕິດຕັ້ງລະບົບໃສ່ຄອມພິວເຕີສ່ວນຕົວ ຫຼື Note book ຜູ້ລົງທຶນກໍ່ຈະສາມາດສົ່ງຄຳສັ່ງຊື້-ຂາຍຮຸ້ນໄດ້ດ້ວຍຕົວເອງທັນທີ.

## 27. ຮູ້ຈັກກັບການວາງແຜນການເງິນເພື່ອຊີວິດທີ່ດີ

ຫຼາຍໆທ່ານຄົງຈະໄດ້ຍິນຄຳເວົ້າທີ່ວ່າ: **"ການວາງແຜນການເງິນ"** ຊຶ່ງມັນເປັນປະໂຫຍກໜຶ່ງທີ່ຫຼາຍທ່ານຄຸ້ນເຄີຍ, ແຕ່ທ່ານຮູ້ຫຼືບໍ່ວ່າ ຄວາມໝາຍທີ່ແທ້ຈິງນັ້ນແມ່ນໝາຍຄວາມວ່າແນວໃດ ແລະ ຈະມີຂໍ້ດີອັນໃດທີ່ຈະເຮັດໃຫ້ການດຳລົງຊີວິດຂອງທ່ານມີການປ່ຽນແປງທີ່ດີຂຶ້ນ.

ເຮົາມາຮູ້ຈັກພ້ອມໆກັນເລີຍ, ການວາງແຜນການເງິນ ແມ່ນການຈັດສັນລາຍໄດ້ ແລະ ລາຍຈ່າຍເພື່ອເຮັດໃຫ້ການເງິນຂອງທ່ານເປັນໄປຢ່າງມີລະບົບ ແລະ ມີປະສິດທິພາບຫຼາຍທີ່ສຸດດ້ວຍການຮູ້ຈັກເກັບທ້ອນ ແລະ ແບ່ງເງິນອອມຂອງທ່ານໃຫ້ເປັນສ່ວນໆ ຕາມຄວາມເໝາະສົມຕົວຈິງຂອງທ່ານ ຄື:

ເກັບເງິນໄວ້ເພື່ອເປັນເງິນແຮສຸກເສີນເວລາເຈັບເປັນ, ຊຶ່ງທ່ານຄວນກຽມເງິນແຮດັ່ງກ່າວໄວ້ປະມານ 3-6 ເທົ່າ ຂອງຄ່າໃຊ້ຈ່າຍປະຈຳເດືອນ ເພື່ອເວລາດັ່ງກ່າວມາຮອດຈິ່ງຈະບໍ່ກະທົບຕໍ່ການເງິນຂອງທ່ານ, ຊຶ່ງຜູ່ທີ່ມີເງື່ອນໄຂແຮໄວ້ຫຼາຍກ່ວານີ້ຍິ່ງເປັນການດີ; ເງິນທ້ອນເພື່ອເປັນທຶນການສຶກສາຂອງລູກ ທ່ານຄວນເກັບໄວ້ຢ່າງໜ້ອຍ 5% ຂອງລາຍຮັບປະຈຳເດືອນ; ເງິນທ້ອນເພື່ອຍາມແກ່ເຖົ້າ ທ່ານຄວນຈະເກັບໄວ້ຢ່າງໜ້ອຍ 10% ຂອງລາຍຮັບປະຈຳເດືອນ ເພາະເປັນການໃຊ້ຈ່າຍເພື່ອຄວາມສຸກໃນບັ້ນປາຍຊີວິດຂອງທ່ານເອງ; ເງິນທ້ອນເພື່ອຄວາມສຸກໄລຍະສັ້ນ ກໍ່ຄື ການໄປພັກຜ່ອນທ່ອງທ່ຽວ ເກັບໄວ້ຢ່າງໜ້ອຍ 5% ຂອງລາຍຮັບປະຈຳເດືອນ. ນອກຈາກນັ້ນ ທ່ານກໍ່ຕ້ອງຮູ້ຈັກການຊອກຫາຊ່ອງທາງໃນການລົງທຶນ ເພື່ອເຮັດໃຫ້ເງິນອອມຂອງທ່ານແຕກດອກ ອອກຜົນ ແລະ ເຕີບໃຫຍ່ຢ່າງຕໍ່ເນື່ອງ.

ແນ່ນອນວ່າ ກ່ອນທີ່ຈະນຳເອົາເງິນທີ່ໄດ້ມານັ້ນໄປໃຊ້ຈ່າຍ ແລະ ບໍລິຫານໃຫ້ພຽງພໍໃນຊີວິດປະຈຳວັນຂອງທ່ານນັ້ນ ການໃຊ້ຈ່າຍຕ້ອງມີການຈັດສັນໃຫ້ເໝາະສົມ ໂດຍອີງໃສ່ຄວາມສຳຄັນຈຳເປັນໃນການໃຊ້ຈ່າຍ ເພື່ອຫຼີກເວັ້ນການໃຊ້ຈ່າຍແບບຟູມເຟືອຍເກີນຄວາມຈຳເປັນ. ການປະຕິບັດດັ່ງກ່າວ ຈະເຮັດໃຫ້ທ່ານຮູ້ໄດ້ເຖິງລາຍຮັບ-ລາຍຈ່າຍແນ່ນອນຂອງຕົນ ແລະ ຍັງຈະເຮັດໃຫ້ທ່ານສາມາດບັນລຸຕາມເປົ້າໝາຍທາງການເງິນທີ່ວາງໄວ້, ພ້ອມທັງ ຈະຊ່ວຍສ້າງສະພາບຄ່ອງທາງການເງິນໃຫ້ຕໍ່ເນື່ອງ ແລະ ມີຄວາມໝັ້ນຄົງອີກດ້ວຍ.

ດັ່ງນັ້ນ, ການວາງແຜນການເງິນ ຈະເປັນຕົວຊ່ວຍໃນການບໍລິຫານເງິນຂອງທ່ານໃຫ້ມີປະສິດທິຜົນ ຄຽງຄູ່ກັບຊ່ວຍສ້າງສະພາບຄ່ອງທາງການເງິນໃຫ້ໝັ້ນຄົງ ແລະ ບັນລຸຜົນສຳເລັດໃນອະນາຄົດອີກດ້ວຍ ແລະ ສຸດທ້າຍການວາງແຜນການເງິນຈະຊ່ວຍຮອງຮັບໃນຍາມບຳນານ ຫຼື ບັ້ນປາຍຊີວິດຂອງທ່ານ ຊຶ່ງຖ້າເຮົາມີການວາງແຜນການເງິນທີ່ດີ ເຊື່ອແນ່ວ່າ ຊີວິດຫຼັງບຳນານຂອງທ່ານຈະມີຄວາມສຸກສະບາຍຢ່າງແນ່ນອນ.

### 28. ກອງປະຊຸມຜູ່ຖືຮຸ້ນແມ່ນຫຍັງ?

ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີການຈັດຕັ້ງກອງປະຊຸມຜູ່ຖືຮຸ້ນໃນທຸກໆປີ, ຊຶ່ງບໍລິສັດຈົດທະບຽນຈະເປັນຜູ່ຮັບຜິດຊອບກະກຽມກ່ຽວກັບ ວາລະກອງປະຊຸມ, ໜັງສືແຈ້ງເຊີນ ແລະ ເອກະສານກ່ຽວຂ້ອງຕ່າງໆ ເພື່ອນຳສະເໜີຕໍ່ກອງປະຊຸມຜູ່ຖືຮຸ້ນພິຈາລະນາ. ດັ່ງນັ້ນ, ກອງປະຊຸມຜູ່ຖືຮຸ້ນ ຈຶ່ງແມ່ນກອງປະຊຸມສູງສຸດຂອງບໍລິສັດຈົດທະບຽນ. ກອງປະຊຸມຜູ່ຮຸ້ນຂອງບໍລິສັດຈົດທະບຽນ ປະກອບມີ 2 ປະເພດ ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນ ຕ້ອງເປີດຂຶ້ນຢ່າງໜ້ອຍປີລະຄັ້ງ, ໄລຍະເວລາຂອງການເປີດກອງປະຊຸມ ແມ່ນກຳນົດໄວ້ໃນກົດລະບຽບຂອງບໍລິສັດ ເພື່ອຮັບຮອງເອົາບົດສະຫຼຸບລາຍງານ ກ່ຽວກັບການດຳເນີນທຸລະກິດ, ເອກະສານລາຍງານການເງິນ, ການແບ່ງເງິນປັນຜົນ, ແຜນການດຳເນີນທຸລະກິດຂອງບໍລິສັດ ເຫຼົ່ານີ້ເປັນຕົ້ນ.

ສຳລັບກອງປະຊຸມວິສາມັນ ແມ່ນເປີດຂຶ້ນເວລາໃດກໍ່ໄດ້ຖ້າເຫັນວ່າມີຄວາມຈຳເປັນ ຫຼື ມີເຫດການຮີບດ່ວນຕ້ອງແຈ້ງໃຫ້ຜູ່ຖືຮຸ້ນຊາບ ເຊັ່ນ: ການປ່ຽນແປງກົດລະບຽບ ຫຼື ຄະນະບໍລິຫານຂອງບໍລິສັດ, ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ ແລະ ການປ່ຽນແປງຜູ່ກວດສອບພາຍນອກ ເຫຼົ່ານີ້ເປັນຕົ້ນ. ກອງປະວິສາມັນ ຈະສາມາດເປີດຂຶ້ນໄດ້ ໃນກໍລະນີດັ່ງຕໍ່ໄປນີ້: (1) ມີຜູ່ອຳນວຍການເກີນກວ່າເຄິ່ງໜຶ່ງ ເຫັນດີໃຫ້ເປີດກອງປະຊຸມຜູ່ຖືຮຸ້ນ; (2) ຜູ່ຖືຮຸ້ນຮ້ອງຟ້ອງຕໍ່ສານ ແລະ ສານສັ່ງໃຫ້ເປີດກອງປະຊຸມ; (3) ມີການຮ້ອງຂໍຂອງຜູ່ຖືຮຸ້ນ ຊຶ່ງມີຈຳນວນຮຸ້ນຢ່າງໜ້ອຍເທົ່າກັບຊາວສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດທີ່ຖອກແລ້ວ.

### 29. ເປັນຫຍັງຜູ່ຖືຮຸ້ນຈຶ່ງຈຳເປັນຕ້ອງເຂົ້າຮ່ວມກອງປະຊຸມຜູ່ຖືຮຸ້ນ?

ການເຂົ້າຮ່ວມກອງປະຊຸມຜູ່ຖືຮຸ້ນ ແມ່ນ ສິດ ແລະ ໜ້າທີ່ ຂອງຜູ່ຖືຮຸ້ນທັງໝົດທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ່ຖືຄອງຮຸ້ນ. ຜູ່ຖືຮຸ້ນຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວ ເພື່ອເປັນການຮັກສາສິດ ແລະ ຜົນປະໂຫຍດຂອງ

ຕົນ ໃນການຕັດສິນບັນຫາສຳຄັນຂອງບໍລິສັດ, ກຳນົດທິດທາງ ແລະ ແຜນການດຳເນີນທຸລະກິດຂອງບໍລິສັດທີ່ຕົນຖືຮຸ້ນ. ໃນກອງປະຊຸມຜູ່ຖືຮຸ້ນ ຜູ່ຖືຮຸ້ນມີສິດສະເໜີຄຳຄິດຄຳເຫັນ ຫຼື ຕັ້ງຄຳຖາມເຈາະຈີ້ມ ກ່ຽວກັບການດຳເນີນທຸລະກິດຂອງບໍລິສັດ ແລະ ກວດສອບເອກະສານຂອງບໍລິສັດ ເພື່ອປົກປ້ອງຜົນປະໂຫຍດຂອງຕົນຢ່າງເຕັມສ່ວນ.

ດັ່ງນັ້ນ, ເພື່ອເປັນການຮັກສາສິດ ແລະ ຜົນປະໂຫຍດຂອງຕົນ ຜູ່ຖືຮຸ້ນທຸກຄົນຕ້ອງໃຫ້ຄວາມສຳຄັນໃນການເຂົ້າຮ່ວມກອງປະຊຸມຜູ່ຖືຮຸ້ນທຸກຄັ້ງ.

## 30. ສິດຕົ້ນຕໍຂອງຜູ່ຖືຮຸ້ນມີຄືແນວໃດ?

ເມື່ອທ່ານເປັນຜູ່ຖືຮຸ້ນຂອງບໍລິສັດໃດໜຶ່ງທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບລາວ (ຕລຊລ) ທ່ານຈະໄດ້ຮັບສິດຕົ້ນຕໍຈາກການຖືຮຸ້ນ ດັ່ງນີ້:

- ມີສິດໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວ ຫຼື ຜົນການດຳເນີນງານຂອງບໍລິສັດ
- ມີສິດເຂົ້າຮ່ວມກອງປະຊຸມຜູ່ຖືຮຸ້ນ ຊຶ່ງໃນກອງປະຊຸມດັ່ງກ່າວ ຜູ່ຖືຮຸ້ນມີສິດໃນການອອກຄຳຄິດເຫັນ ແລະ ລົງຄະແນນສຽງເຫັນດີ ຫຼື ບໍ່ເຫັນດີ ຕໍ່ມະຕິສຳຄັນຕ່າງໆທາງທຸລະກິດຂອງບໍລິສັດ;
- ມີສິດອອກສຽງໃນການແຕ່ງຕັ້ງ ຫຼື ປົດຕຳແໜ່ງຄະນະສະພາຜູ່ບໍລິຫານ ແລະ ຜູ່ອຳນວຍການ;
- ມີສິດຈອງຊື້ຮຸ້ນທີ່ອອກໃໝ່ຂອງບໍລິສັດ ເມື່ອບໍລິສັດຕ້ອງການອອກຈຳໜ່າຍຮຸ້ນເພີ່ມທຶນ ໃນລາຄາ ແລະ ຈຳນວນ ຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ;
- ມີສິດໄດ້ຮັບເງິນປັນຜົນຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງ ໃນກໍລະນີທີ່ບໍລິສັດມີຜົນກຳໄລ ແລະ ມີມະຕິຕົກລົງເຫັນດີຈາກກອງປະຊຸມຜູ່ຖືຮຸ້ນໃນການຈ່າຍເງິນປັນຜົນໃຫ້ແກ່ຜູ່ຖືຮຸ້ນ.

ການກຳນົດສິດຂອງຜູ່ຖືຮຸ້ນຄືດັ່ງກ່າວຂ້າງເທິງ ກໍ່ເພື່ອຮັບປະກັນໃຫ້ຜູ່ຖືຮຸ້ນສາມາດກວດສອບກວດກາການດຳເນີນງານຂອງບໍລິສັດ, ມີສິດຕັດສິນໃຈຕໍ່ບັນຫາສຳຄັນໃນການດຳເນີນງານຂອງບໍລິສັດ, ເຊິ່ງທັງໝົດນັ້ນ ກໍ່ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ່ຖືຮຸ້ນໃນການຖືຮຸ້ນຂອງບໍລິສັດດັ່ງກ່າວ.

## 31. ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ

ຄວາມຈິງແລ້ວ ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້-ຂາຍຮຸ້ນ ແມ່ນ ຄ່າທຳນຽມໃນການຊື້-ຂາຍ, ຊຶ່ງຜູ່ຊື້ ແລະ ຜູ່ຂາຍ ຕ້ອງໄດ້ຊຳລະໃນເວລາເຮັດທຸລະກຳການຊື້-ຂາຍຮຸ້ນສຳເລັດ. ປະຈຸບັນການຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ ໂດຍລວມແລ້ວ ຜູ່ຊື້ ຈະຕ້ອງໄດ້ຊຳລະຄ່າທຳນຽມການຊື້ 0.70% ຂອງມູນຄ່າການຊື້ຮຸ້ນ ແລະ ຜູ່ຂາຍ ຈະຕ້ອງຊຳລະຄ່າທຳນຽມການຂາຍ 1.00% ຂອງມູນຄ່າການຂາຍຮຸ້ນ, ຊຶ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ລາຍການ | ຜູ່ຊື້ | ຜູ່ຂາຍ |
|---|---|---|
| ບໍລິສັດຫຼັກຊັບ | 0.30% | 0.30% |
| ຕະຫຼາດຫຼັກຊັບລາວ | 0.30% | 0.30% |
| ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ | 0.09% | 0.09% |
| ກອງທຶນປົກປ້ອງຄວາມສ່ຽງ | 0.01% | 0.01% |
| ລັດຖະບານ | - | 0.30% |
| **ລວມ** | 0.70% | 1.00% |

ຄ່າໃຊ້ຈ່າຍດັ່ງກ່າວ ແມ່ນຄ່າໃຊ້ຈ່າຍທີ່ໄດ້ຈັດເກັບໃນປະຈຸບັນ, ແຕ່ໃນອານາຄົດອາດມີການປັບປຸງ ເພື່ອຊຸກຍູ້ໃຫ້ມວນຊົນມາລົງທຶນໃນຕະຫຼາດຫຼັກຊັບລາວຫຼາຍຂຶ້ນ ກໍຄືການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ຂະຫຍາຍຕົວຍິ່ງຂຶ້ນ.

ຜູ້ລົງທຶນຕ້ອງຄໍານຶງສະເໝີວ່າ: **ທຸກການລົງທຶນມີຄວາມສ່ຽງ ຜູ້ລົງທຶນຄວນສຶກສາຂໍ້ມູນໃຫ້ຖີ່ຖ້ວນກ່ອນຕັດສິນໃຈລົງທຶນ.**

**32. ການປັ່ນຮຸ້ນແມ່ນຫຍັງ? ໃຜເປັນຄົນປັ່ນ?**

ການປັ່ນຮຸ້ນ ໝາຍເຖິງ ການກະທໍາໃດໜຶ່ງທີ່ເຮັດໃຫ້ລາຄາຮຸ້ນ ເພີ່ມຂຶ້ນ ຫຼື ຫຼຸດລົງກວ່າຄວາມເປັນຈິງໂດຍບໍ່ມີສາເຫດ. ການປັ່ນຮຸ້ນສະແດງອອກ ໃນກໍລະນີໃດໜຶ່ງ ດັ່ງນີ້:

- ຊື້-ຂາຍຮຸ້ນ ດ້ວຍຕົນເອງ ຫຼື ຮ່ວມກັບພາກສ່ວນອື່ນ ໂດຍນໍາໃຊ້ຄວາມໄດ້ປຽບທາງດ້ານເງິນທຶນ, ການຖືຄອງຮຸ້ນ ຫຼື ການເຂົ້າເຖິງຂໍ້ມູນຂ່າວສານ ເພື່ອການຊື້-ຂາຍຮຸ້ນຢ່າງຕໍ່ເນື່ອງ;
- ຊື້-ຂາຍຮຸ້ນ ຕາມເວລາ, ລາຄາ ຫຼື ວິທີການໃດໜຶ່ງ ທີ່ມີການຕົກລົງກັນລ່ວງໜ້າ;
- ຊື້-ຂາຍຮຸ້ນ ໂດຍນໍາໃຊ້ຫຼາຍບັນຊີທີ່ຕົນຄຸ້ມຄອງ;
- ດໍາເນີນດ້ວຍວິທີການອື່ນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ຜູ້ລົງທຶນ ແລະ ສະຖຽນລະພາບຂອງຕະຫຼາດຫຼັກຊັບ.

**ການປັ່ນຮຸ້ນຖືວ່າເປັນທຸລະກໍາທີ່ຜິດກົດໝາຍວ່າດ້ວຍຫຼັກຊັບ.**

**33. ການກໍານົດລາຄາຮຸ້ນ ແມ່ນໃຜເປັນຜູ້ກໍານົດຢູ່ໃນຕະຫຼາດຂັ້ນໜຶ່ງ ແລະ ຂັ້ນສອງ?**

- **<u>ການກໍານົດລາຄາຮຸ້ນໃນຕະຫຼາດຂັ້ນໜຶ່ງ</u>:** ອີງຕາມ "ລະບຽບວ່າດ້ວຍການອອກຈໍາໜ່າຍຮຸ້ນ", ການກໍານົດລາຄາຮຸ້ນທີ່ຈະອອກຈໍາໜ່າຍໃຫ້ແກ່ມວນຊົນ ແມ່ນບໍລິສັດອອກຈໍາໜ່າຍຮຸ້ນຕ້ອງຮ່ວມກັບທີ່ປຶກສາດ້ານການເງິນດໍາເນີນການກໍານົດລາຄາຮຸ້ນທີ່ຈະອອກຈໍາໜ່າຍໃຫ້ແກ່ມວນຊົນ. ການກໍານົດລາຄາຮຸ້ນດັ່ງກ່າວສາມາດກໍານົດລາຄາຮຸ້ນແບບຄົງທີ່ (Fixed-price Method) ຫຼື ສາມາດກໍານົດລາຄາຮຸ້ນແບບການດໍາເນີນການສໍາຫຼວດຄວາມຕ້ອງການຊື້ຮຸ້ນ (Book Building) ຫຼື ວິທີອື່ນໆທີ່ໄດ້ການເຫັນດີຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສໍານັກງານ ຄຄຊ) ເປັນຕົ້ນແມ່ນ ວິທີທີ່ນິຍົມໃຊ້ເພື່ອກໍານົດລາຄາຮຸ້ນໃນຕະ ຫຼາດຂັ້ນໜຶ່ງແມ່ນ ວິທີອັດຕາສ່ວນລາຄາຕໍ່ກໍາໄລສຸດທິຕໍ່ຮຸ້ນ (Price to Earnings Ratio: P/E) ດັ່ງສູດຄິດໄລ່ ລຸ່ມນີ້:

  **ສູດຄິດໄລ່ລາຄາຂາຍ = EPS x P/E**

  ໃນນັ້ນ, EPS (Earnings Per Share) ແມ່ນກໍາໄລສຸດທິຕໍ່ຮຸ້ນ; P/E ແມ່ນອັດຕາສ່ວນລາຄາຕໍ່ກໍາໄລສຸດທິຕໍ່ຮຸ້ນ, ຊຶ່ງສາມາດນໍາໃຊ້ຄ່າ P/E ຂອງຂະແໜງການດຽວກັນເປັນບ່ອນອີງ.
- **<u>ການກໍານົດລາຄາຮຸ້ນໃນຕະຫຼາດຂັ້ນສອງ</u>:** ແມ່ນຜູ້ລົງທຶນເປັນຜູ້ກໍານົດ ດ້ວຍການສົ່ງລາຄາສະເໜີຊື້ ແລະ ລາຄາສະເໜີຂາຍເຂົ້າສູ່ລະບົບຈັບຄູ່ຢູ່ຕະຫຼາດຫຼັກຊັບລາວ (ຕລຊລ) ໂດຍຜ່ານນາຍໜ້າຊື້-ຂາຍຮຸ້ນ ຕາມຂອບເຂດເພດານຂອງ ຕລຊລ ກໍານົດ ±10% ຂອງລາຄາປິດໃນມື້ວານ. ຕົວຢ່າງ: ຖ້າລາຄາຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ປິດມື້ວານຢູ່ທີ່ 7.000 ກີບ ຂອບເຂດລາຄາສູງສຸດສໍາລັບມື້ນີ້ແມ່ນ 7.000 + (7.000 x 10%) = 7.700 ກີບ ແລະ ລາຄາຕໍ່າສຸດແມ່ນ 7.000 - (7.000 x 10%) = 6.300 ກີບ. ຜູ້ລົງທຶນສາມາດສົ່ງຄໍາສັ່ງຊື້-ຂາຍຢູ່ໃນຂອບເຂດລາຄາດັ່ງກ່າວ ແຕ່ຈະສົ່ງໃນລາຄາໃດແມ່ນຂຶ້ນກັບການຕັດສິນໃຈຂອງຜູ້ລົງທຶນເອງ.

ໂດຍທົ່ວໄປການຕັດສິນໃຈຂອງຜູ້ລົງທຶນ ແມ່ນອີງໃສ່ບາງປັດໃຈ ຄື: (1) ອີງໃສ່ການວິເຄາະປັດໃຈພື້ນຖານ (Fundamental Analysis) ເປັນການວິເຄາະເພື່ອຊອກຫາມູນຄ່າທີ່ແທ້ຈິງຂອງຮຸ້ນໃນປະຈຸບັນ ເຊັ່ນ: ວິເຄາະສະພາບເສດຖະກິດ, ວິເຄາະສະພາບຂະແໜງການ ແລະ ວິເຄາະສະພາບບໍລິສັດ; (2) ອີງໃສ່ການວິເຄາະທາງເຕັກນິກ (Technical Analysis) ເປັນການວິເຄາະເພື່ອຄາດຄະເນແນວໂນ້ມລາຄາຮຸ້ນໃນອະນາຄົດ ເຊັ່ນ: ວິເຄາະເສັ້ນສະແດງການປ່ຽນແປງຂອງລາຄາ, ເສັ້ນສະແດງປະລິມານການຊື້-ຂາຍ ເປັນຕົ້ນ. ທັງໝົດນີ້ກໍ່ເພື່ອເປັນຂໍ້ມູນປະກອບໃຫ້ແກ່ຜູ້ລົງທຶນສາມາດຕັດສິນໃຈໃນການຊື້-ຂາຍໄດ້ຖືກຈັງຫວະ.

### 34. ຖ້າຊື້ຮຸ້ນໃນລາຄາແພງ ແລ້ວລາຄາຫຼຸດລົງຈະເຮັດແນວໃດ?

ຕ້ອງເຂົ້າໃຈນຳກັນວ່າ ທຸກໆການລົງທຶນລ້ວນມີຄວາມສ່ຽງ. ການລົງທຶນໃນຮຸ້ນກໍ່ມີຄວາມສ່ຽງເຊັ່ນກັນ, ລາຄາຮຸ້ນກໍ່ມີການປ່ຽນແປງຢູ່ຕະຫຼອດເວລາ ມີຂຶ້ນມີລົງ. ສະນັ້ນ ກ່ອນຕັດສິນໃຈລົງທຶນ ທ່ານຕ້ອງວິເຄາະໃຫ້ຖີ່ຖ້ວນ. ຖ້າທ່ານບໍ່ມີຄວາມຊຳນານດ້ານການຊື້-ຂາຍຮຸ້ນ ກໍຄວນປຶກສາກັບບໍລິສັດຫຼັກຊັບ (ຜູ້ເຮັດໜ້າທີ່ໃຫ້ຄຳປຶກສາແກ່ຜູ້ລົງທຶນ).

ກໍລະນີ ທ່ານໄດ້ຊື້ຮຸ້ນໃນລາຄາແພງ ແລະ ຫຼັງຈາກນັ້ນລາຄາຕໍ່າລົງ ທ່ານອາດພິຈາລະນາ ດັ່ງນີ້:

- **ຖ້າທ່ານເປັນຜູ້ລົງທຶນແບບບໍ່ມັກຄວາມສ່ຽງ** ສະແດງວ່າ ທ່ານເປັນຜູ້ລົງທຶນທີ່ຍອມຮັບຄວາມສ່ຽງໄດ້ຂ້ອນຂ້າງຕໍ່າ (ບໍ່ມັກຄວາມສ່ຽງ) ແລະ ໃຫ້ຄວາມສຳຄັນກັບຕົ້ນທຶນຫຼາຍກວ່າຜົນຕອບແທນ. ທ່ານອາດຂາຍອອກ ເພື່ອຢຸດການຂາດທຶນ ຫາກທ່ານຄິດວ່າລາຄາຮຸ້ນຍັງຈະຫຼຸດລົງໄປອີກ;
- **ຖ້າທ່ານເປັນຜູ້ລົງທຶນແບບມັກຄວາມສ່ຽງ** (ເປັນຜູ້ລົງທຶນທີ່ມັກຊື້-ຂາຍເພື່ອເກັງກຳໄລຈາກສ່ວນຕ່າງຂອງລາຄາຮຸ້ນ) ສະແດງວ່າ ທ່ານເປັນຜູ້ລົງທຶນທີ່ມີຄວາມເຊື່ອໝັ້ນໃນຕົວເອງສູງ, ກ້າໄດ້ກ້າເສັຍ ແລະ ຮັບຄວາມສ່ຽງໄດ້ສູງ. ທ່ານອາດຈະພິຈາລະນາຖືຄອງຮຸ້ນດັ່ງກ່າວໄວ້ ຫຼື ເຂົ້າໄປຊື້ຮຸ້ນດັ່ງກ່າວຕື່ມອີກ ຖ້າຫາກທ່ານຄິດວ່າຮຸ້ນນັ້ນຈະມີລາຄາເພີ່ມສູງຂຶ້ນ ເພື່ອຂາຍເອົາກຳໄລຈາກສ່ວນຕ່າງຂອງລາຄາທີ່ຈະເພີ່ມຂຶ້ນໃນຕໍ່ໜ້າ.

### 35. ການຈັບຄູ່ໝາຍຄວາມວ່າແນວໃດ? ແລະ ການຊື້-ຂາຍຮຸ້ນແມ່ນຊື້-ຂາຍໄດ້ຈັກຮຸ້ນຂຶ້ນໄປ?

ການຈັບຄູ່ ແມ່ນການຄົ້ນຫາຄຳສັ່ງຊື້ ແລະ ຄຳສັ່ງຂາຍຮຸ້ນທີ່ມີລາຄາເທົ່າກັນ ທີ່ສັ່ງຊື້-ຂາຍໃນເວລາດຽວກັນ. ປະຈຸບັນ ຕະຫຼາດຫຼັກຊັບລາວ ແມ່ນນຳໃຊ້ຫຼັກການຈັບຄູ່ຊື້-ຂາຍຮຸ້ນແບບວິນາທີຕໍ່ວິນາທີ ແລະ ການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ ໃນແຕ່ລະຄັ້ງແມ່ນສາມາດສົ່ງຄຳສັ່ງຊື້ ຫຼື ຂາຍຮຸ້ນໄດ້ນັບແຕ່ 1 ລ໋ອດ (1 ລ໋ອດ = 100 ຮຸ້ນ) ຮຸ້ນຂຶ້ນໄປ.

ການຈັບຄູ່ ແມ່ນອີງຕາມຫຼັກການທີ່ກຳນົດໄວ້ຢູ່ໃນລະບຽບການຂອງຕະຫຼາດຫຼັກຊັບລາວ ຄື: “ລະບຽບວ່າດ້ວຍການເຄື່ອນໄຫວຊື້-ຂາຍຫຼັກຊັບ” (Market Operation Regulation) ມາດຕາ 13 ກຳ ນົດໄວ້ວ່າ: ຫຼັກການຈັບຄູ່ ແລະ ຈັດສັນຮຸ້ນຂອງຕະຫຼາດຫຼັກຊັບລາວ ແມ່ນອີງຕາມ 3 ບູລິມະສິດ ຄື:

1) ບູລິມະສິດດ້ານລາຄາ
   - ດ້ານຜູ້ຂາຍ: ສົ່ງຄຳສັ່ງຂາຍທີ່ມີລາຄາຕໍ່າກວ່າຈະໄດ້ບູລິມະສິດກ່ອນ.
   - ດ້ານຜູ້ຊື້: ສົ່ງຄຳສັ່ງຊື້ທີ່ມີລາຄາສູງກວ່າຈະໄດ້ບູລິມະສິດກ່ອນ.

   ຕົວຢ່າງ:

| ຜູ່ລົງທຶນ | ເວລາ | ຈຳນວນຮຸ້ນສະເໜີຂາຍ (ຮຸ້ນ) | ລາຄາ (ກີບ) | ຈຳນວນຮຸ້ນສະເໜີຊື້ (ຮຸ້ນ) | ເວລາ | ຜູ່ລົງທຶນ |
|---|---|---|---|---|---|---|
| ກ | 9:05 | 1.000 | 7.500 | | | |
| | | | 7.500 | 1.000 | 9:05 | ຂ |
| | | | 7.550 | 1.000 | 9:05 | ຄ |

ອີງຕາມຫຼັກການບູລິມະສິດດ້ານລາຄາ ດັ່ງຕາຕະລາງຂ້າງເທິງ ແມ່ນຜູ່ລົງທຶນ ຄ ຈະສາມາດຊື້ຮຸ້ນໄດ້ໃນຈຳນວນ ທີ່ຜູ່ລົງທຶນ ຄ ຕ້ອງການຊື້ ຄື: 1.000 ຮຸ້ນ, ໃນລາຄາ 7.550 ກີບ ແລະ ຜູ່ລົງທຶນ ກ ກໍຈະສາມາດຂາຍໄດ້ໃນຈຳນວນ 1.000 ຮຸ້ນ, ໃນລາຄາ 7.550 ກີບ.

2) ບູລິມະສິດດ້ານເວລາ

ໃນກໍລະນີທີມີສິ່ງຄຳສັ່ງຊື້ ຫຼື ຂາຍ ທີ່ມີລາຄາເທົ່າກັນ, ສິ່ງຄຳສັ່ງຊື້ ຫຼື ຄຳສັ່ງຂາຍ ທີ່ສິ່ງເຂົ້າມາກ່ອນຈະໄດ້ບູລິມະສິດກ່ອນ.

ຕົວຢ່າງ:

| ຜູ່ລົງທຶນ | ເວລາ | ຈຳນວນຮຸ້ນສະເໜີຂາຍ (ຮຸ້ນ) | ລາຄາ (ກີບ) | ຈຳນວນຮຸ້ນສະເໜີຊື້ (ຮຸ້ນ) | ເວລາ | ຜູ່ລົງທຶນ |
|---|---|---|---|---|---|---|
| ກ | 9:05 | 1.000 | 7.500 | | | |
| | | | 7.500 | 1.000 | 9:05 | ຂ |
| | | | 7.550 | 1.000 | 9:06 | ຄ |

ອີງຕາມຫຼັກການບູລິມະສິດດ້ານເວລາ ດັ່ງຕາຕະລາງຂ້າງເທິງ ແມ່ນຜູ່ລົງທຶນ ຂ ຈະຊື້ຮຸ້ນໄດ້ໃນຈຳນວນທີ່ຜູ່ລົງທຶນ ຂ ຕ້ອງການຊື້ ຄື: 1.000 ຮຸ້ນ, ໃນລາຄາ 7.500 ກີບ.

3) ບູລິມະສິດດ້ານປະລິມານ

ໃນກໍລະນີທີມີຄຳສັ່ງຊື້ ຫຼື ຂາຍ ທີ່ມີລາຄາເທົ່າກັນ ແລະ ເວລາດຽວກັນ, ຄຳສັ່ງຊື້ ຫຼື ຄຳສັ່ງຂາຍທີ່ມີປະລິມານສູງກວ່າຈະໄດ້ບູລິມະສິດນັ້ນກ່ອນ.

ຕົວຢ່າງ:

| ຜູ່ລົງທຶນ | ເວລາ | ຈຳນວນຮຸ້ນສະເໜີຂາຍ (ຮຸ້ນ) | ລາຄາ (ກີບ) | ຈຳນວນຮຸ້ນສະເໜີຊື້ (ຮຸ້ນ) | ເວລາ | ຜູ່ລົງທຶນ |
|---|---|---|---|---|---|---|
| ກ | 9:10 | 1.000 | 7.500 | | | |
| | | | 7.500 | 500 | 9:10 | ຂ |
| | | | 7.500 | 1.000 | 9:10 | ຄ |

ອີງຕາມຫຼັກການບູລິມະສິດດ້ານປະລິມານ ດັ່ງຕາຕະລາງຂ້າງເທິງ ແມ່ນຜູ່ລົງທຶນ ຄ ຈະຊື້ຮຸ້ນໄດ້ໃນຈຳນວນທີ່ຜູ່ລົງທຶນ ຄ ຕ້ອງການຊື້ ຄື: 1.000 ຮຸ້ນ, ໃນລາຄາ 7.500 ກີບ.

**36. ພະນັກງານລັດສາມາດຊື້-ຂາຍຮຸ້ນໄດ້ບໍ່?**

ໂດຍທົ່ວໄປແລ້ວການລົງທຶນໃນຕະຫຼາດຮຸ້ນ ແມ່ນທຸກຄົນທີ່ມີອາຍຸ 18 ປີ ຂຶ້ນໄປສາມາດຊື້-ຂາຍ ຫຼື ລົງທຶນໃນຕະຫຼາດຮຸ້ນໄດ້, ສະນັ້ນ ພະນັກງານລັດກໍ່ບໍ່ແຕກຕ່າງຈາກບຸກຄົນ ແລະ ປະຊາຊົນທົ່ວໄປ ມີສິດໃນການຊື້-ຂາຍຮຸ້ນຕາມຄວາມເໝາະສົມກັບຖານະການເງິນຂອງຕົນເອງໄດ້.

**37. ຖ້າຜູ້ຖືຮຸ້ນຕ້ອງການຂາຍຮຸ້ນໄດ້ໄວ ຄວນເຮັດແນວໃດ?**

ປຶກສາກັບນາຍໜ້າຊື້-ຂາຍຫຼັກຊັບກ່ອນການຂາຍຮຸ້ນ ເພື່ອສອບຖາມກ່ຽວກັບລາຄາສະເໜີຊື້ຂອງຜູ້ລົງທຶນວ່າຜູ້ສະເໜີຊື້ຕ້ອງການຊື້ໃນລາຄາເທົ່າໃດ ແລະ ຜູ້ສະເໜີຂາຍຮຸ້ນຕ້ອງຂາຍໃນລາຄາທີ່ເທົ່າກັບຜູ້ສະເໜີຊື້ ຫຼື ໃນລາຄາທີ່ຕໍ່າກວ່າຜູ້ສະເໜີຊື້ ຈຶ່ງສາມາດຂາຍຮຸ້ນໄດ້ໄວ.

<u>ຕົວຢ່າງ:</u> ມື້ວານລາຄາຮຸ້ນຂອງທ່ານມີລາຄາປິດທີ່ 7.500 ກີບ/ຮຸ້ນ ຖ້າທ່ານຂາຍຮຸ້ນຕ້ອງສະເໜີລາຄາສັ່ງຂາຍຢູ່ທີ່ 7.500 ກີບ/ຮຸ້ນ ຫຼື ຫຼຸດຕໍ່າລົງຈົນກວ່າຈະໄດ້ຂາຍ ໂດຍບໍ່ໃຫ້ຫຼຸດຂອບເຂດ ±10% ຫຼືບໍ່ຫຼຸດ 6.750 ກີບ.

ການຂາຍຮຸ້ນກໍເໝືອນກັບການຂາຍສິນຄ້າທົ່ວໄປ. ໃນເວລາເຮົາຕ້ອງການຂາຍ ຖ້າມີຄົນຕ້ອງການຊື້ໃນເວລາດຽວກັນ ໃນຈໍານວນ ແລະ ລາຄາທີ່ເຮົາຕ້ອງການຂາຍ ເຮົາກໍຈະໄດ້ຂາຍສິນຄ້ານັ້ນໆ. ເຖິງຢ່າງໃດກໍຕາມ ກໍລະນີທ່ານຕ້ອງການຂາຍຮຸ້ນ (ອາດບໍ່ສາມາດຂາຍໄດ້ໄວຕາມທີ່ທ່ານຕ້ອງການ) ແມ່ນສາມາດປຶກສາກັບນາຍໜ້າຊື້-ຂາຍຫຼັກຊັບ ເພື່ອສອບຖາມກ່ຽວກັບຂອບເຂດລາຄາຊື້-ຂາຍໃນມື້.

**38. ການຊື້-ຂາຍຮຸ້ນມີການຂາດທຶນບໍ່ ຫຼື ມີແຕ່ກໍາໄລ?**

ການຊື້-ຂາຍຮຸ້ນກໍ່ຄືກັບການລົງທຶນປະເພດຕ່າງໆ ຊຶ່ງສາມາດສ້າງກໍາໄລ ຫຼື ມີການຂາດທຶນໄດ້, ຊຶ່ງຂຶ້ນກັບຈັງຫວະໃນການຊື້-ຂາຍຮຸ້ນ. ສໍາຄັນແມ່ນຜູ້ລົງທຶນຕ້ອງໄດ້ສຶກສາຄົ້ນຄວ້າຫາຂໍ້ມູນຂອງບໍລິສັດຈົດທະບຽນ, ຕິດຕາມຜົນການນໍາເນີນງານຂອງບໍລິສັດຢ່າງສະໝໍ່າສະເໝີ.

ນອກນັ້ນ, ຜູ້ລົງທຶນຕ້ອງຄໍານຶງສະເໝີວ່າ: **ທຸກການລົງທຶນມີຄວາມສ່ຽງ ຜູ້ລົງທຶນຄວນສຶກສາຂໍ້ມູນໃຫ້ຖີ່ຖ້ວນກ່ອນຕັດສິນໃຈລົງທຶນ.**

**39. ການປັນຜົນກໍາໄລຂອງບໍລິສັດຈົດທະບຽນ ມີການແບ່ງປັນແນວໃດ? ຈັກເດືອນ ຈັກປີ ຈຶ່ງມີການປັນຜົນ?**

ຜົນຕອບແທນຈາກການລົງທຶນໃນຮຸ້ນນັ້ນ ແບ່ງອອກເປັນ 2 ປະເພດ ຄື: ເງິນປັນຜົນ ແລະ ກໍາໄລຈາກລາຄາຮຸ້ນທີ່ເພີ່ມຂຶ້ນກໍລະນີຂາຍຮຸ້ນອອກ. ຖ້າລາຄາຮຸ້ນເພີ່ມຂຶ້ນ ແຕ່ບໍ່ໄດ້ຂາຍຮຸ້ນອອກເທື່ອ ຖືວ່າທ່ານມີກໍາໄລທາງບັນຊີ (ເງິນຍັງບໍ່ເຂົ້າມາບັນຊີຕົວຈິງ).

- ເງິນປັນຜົນ (Dividend): ໝາຍເຖິງ ສ່ວນແບ່ງກໍາໄລຂອງບໍລິສັດທີ່ຈະຈ່າຍໃຫ້ແກ່ຜູ້ຖືຮຸ້ນ ຊຶ່ງການຈ່າຍເງິນປັນຜົນແມ່ນຈະຈ່າຍເປັນງວດ ເຊັ່ນ: ເປັນໄຕມາດ, ເຄິ່ງປີ ຫຼື ຕໍ່ປີ ຂຶ້ນກັບນະໂຍບາຍຂອງແຕ່ລະບໍລິສັດ. ໂດຍທົ່ວໄປທ່ານຈະໄດ້ຮັບເງິນປັນຜົນ ກໍ່ຕໍ່ເມື່ອບໍລິສັດປະກາດຈ່າຍເງິນປັນຜົນ ແລະ ທີ່ສໍາຄັນ ທ່ານຕ້ອງເປັນຜູ້ຖືຮຸ້ນທີ່ມີຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ຊຶ່ງການກໍານົດມື້ປິດປຶ້ມບັນຊີຜູ້ຖືຄອງຮຸ້ນ ແມ່ນຕ້ອງຜ່ານສະພາຜູ້ບໍລິຫານພິຈາລະນາ ແລະ ໄດ້ຮັບການເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. ການຄິດໄລ່ເງິນປັນຜົນທີ່ທ່ານຈະໄດ້ຮັບ ແມ່ນຄິດໄລ່ດ້ວຍ ການເອົາຈໍານວນຮຸ້ນທີ່ທ່ານຖື ຄູນດ້ວຍ ຈໍານວນເງິນປັນຜົນຕໍ່ຮຸ້ນ ທີ່ບໍລິສັດປະກາດຈ່າຍ. ຕົວຢ່າງ: ທ່ານຖືຮຸ້ນຂອງ ບໍລິສັດ ກ ຈໍານວນ 100 ຮຸ້ນ, ບໍລິສັດ ກ ມີນະໂຍບາຍຈ່າຍເງິນປັນຜົນ ຈໍານວນ 100 ກີບ/ຮຸ້ນ. ເງິນປັນຜົນທີ່ທ່ານຈະໄດ້ຮັບແມ່ນ: 100 ຮຸ້ນ x 100 ກີບ = 100.000 ກີບ.
- ກໍາໄລຈາກລາຄາຮຸ້ນທີ່ປ່ຽນແປງ (Capital Gain): ໝາຍເຖິງ ກໍາໄລຈາກການຂາຍຮຸ້ນ ທີ່ເກີດຈາກສ່ວນຕ່າງຂອງລາຄາຮຸ້ນ. ຕົວຢ່າງ: ທ່ານຊື້ຮຸ້ນຂອງ ບໍລິສັດ ກ ໃນ ຕລຊລ ໃນລາຄາ 2.000 ກີບ ຈໍານວນ 100

ຮຸ້ນ ເປັນເງິນລົງທຶນ (2.000 ກີບ x 100 ຮຸ້ນ) + 1.400 ກີບ (ຊຶ່ງໃນເວລາຊື້ຮຸ້ນໃນ ຕລຊລ ທ່ານຈະໄດ້ຈ່າຍຄ່າທຳນຽມການຊື້ 0,70% ຂອງມູນຄ່າຊື້) = 201.400 ກີບ. ຖ້າລາຄາຮຸ້ນຂອງ ບໍລິສັດ ກ ປັບໂຕສູງຂຶ້ນ ເປັນ 3.000 ກີບ, ເມື່ອທ່ານຂາຍຮຸ້ນຂອງ ບໍລິສັດ ກ ອອກທັງໝົດ ທ່ານກໍ່ຈະໄດ້ຮັບເງິນ (3.000 ກີບ x 100 ຮຸ້ນ) - 3.000 ກີບ (ຊຶ່ງໃນເວລາຂາຍຮຸ້ນໃນ ຕລຊລ ທ່ານຈະໄດ້ຈ່າຍຄ່າທຳນຽມການຂາຍ 1% ຂອງມູນຄ່າຂາຍ) = 297.000 ກີບ. ສ່ວນແຕກຕ່າງກໍ່ຄື ກຳໄລ 95.600 ກີບ (297.000 ກີບ - 201.400 ກີບ = 95.600 ກີບ).

**40. ຖ້າບໍລິສັດຈົດທະບຽນລົ້ມລະລາຍ ຜູ່ຖືຮຸ້ນຈະໄດ້ທຶນຄືນ ຫຼື ຕ້ອງໄດ້ໃຊ້ໜີ້ນຳຫຼືບໍ່ໃນເມື່ອບໍລິສັດມີໜີ້?**

ອີງຕາມ "ກົດໝາຍວ່າດ້ວຍວິສາຫະກິດ" (ສະບັບປັບປຸງ), ມາດຕາ 104 ຂໍ້ 7 ແລະ ຂໍ້ 10. ໃນກໍລະນີ ບໍລິສັດຈົດທະບຽນຫາກລົ້ມລະລາຍ ຜູ່ຖືຮຸ້ນຂອງບໍລິສັດຈົດທະບຽນດັ່ງກ່າວຈະສາມາດໄດ້ຮັບເງິນຄືນຕາມອັດຕາສ່ວນຮຸ້ນທີ່ຕົນເອງຖືຄອງຢູ່, ແຕ່ຕ້ອງແມ່ນໄດ້ຮັບພາຍຫຼັງທີ່ບໍລິສັດໄດ້ຊຳລະໜີ້ສິນທຸກຢ່າງຄົບຖ້ວນໝົດແລ້ວ ແລະ ໃນກໍລະນີບໍລິສັດຫາກມີໜີ້ ຜູ່ຖືຮຸ້ນຈະບໍ່ໄດ້ໃຊ້ໜີ້ນຳບໍລິສັດ ເນື່ອງຈາກຜູ່ຖືຮຸ້ນໄດ້ຖອກເງິນຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງໝົດແລ້ວໃນເບື້ອງຕົ້ນ.